ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

# ໂຄງການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງ ຄວາມຮັບຮູ້ໃຫ້ແກ່ ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ

## ຄູ່ມືແນະນຳສຳລັບຄູຝຶກ

ການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການໃຫ້ຄຳປຶກສາທາງ ດ້ານກົດໝາຍກ່ຽວກັບທີ່ດິນ ຢູ່ຂັ້ນບ້ານ

# The Public Information and Awareness Services for Vulnerable Communities in Lao PDR Project

## Training of Trainer Manual

#3: Village Mediation and Village-level Legal Counselling About Land

ໃຫ້ການສະໜັບສະໜູນດ້ານວິຊາການຈາກພາກລັດໂດຍ:

ສາມາດດາວໂຫຼດຜ່ານ QR Code ນີ້

ໃຫ້ທຶນສະໜັບສະໜູນໂດຍ/Funded by:

Government of Japan

JSDF Japan Social Development Fund

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

THE WORLD BANK
IBRD • IDA | WORLD BANK GROUP

# ໂຄງການ
# ການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ໃຫ້ແກ່ ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ

## ຄູ່ມືຝຶກອົບຮົມ

## ການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການໃຫ້ຄຳປຶກສາທາງດ້ານກົດໝາຍ

## ກ່ຽວກັບທີ່ດິນ ຢູ່ຂັ້ນບ້ານ

**ອອກແບບ ແລະ ຮຽບຮຽງໂດຍ:** ທ່ານ ມະໂນລິນ ເທບຄໍາວົງ, ທີ່ປຶກສາດ້ານກົດໝາຍ ຂອງໂຄງການ PIASVC

**ຊີ້ນໍາລວມໂດຍ:** Jeanne Battello, ຫົວໜ້າໂຄງການ ການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ ໃຫ້ແກ່ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ
ທ່ານ ວໍລະສອນ ແດງກາຍະພິຈິດ, ຜູ້ປະສານງານກຸ່ມແລກປ່ຽນຂໍ້ມູນທີ່ດິນ

**<u>ຂອບເຂດຄວາມຮັບຜິດຊອບ:</u>**

ເອກະສານສະບັບນີ້ ຖືກຮວບຮວມໂດຍ ອົງການ ເຮວວິຕັດ ເພື່ອການຮ່ວມມືສາກົນ ປະຈໍາ ສປປ ລາວ ແລະ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ພາຍໃຕ້ໂຄງການ PIASVC ໃນເດືອນ ມັງກອນ 2023.

ເພື່ອການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ເອກະສານນີ້ສາມາດຖືກນໍາໃຊ້ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ໂດຍຜູ້ທີ່ສົນໃຈສໍາລັບການນໍາໃຊ້ທີ່ບໍ່ແມ່ນ ຈຸດປະສົງທາງດ້ານການຄ້າເທົ່ານັ້ນ, ການນໍາໃຊ້ວິທີການສື່ສານ ແລະ ການແປ ທີ່ແຕກຕ່າງກັນ (ທັງ ສໍາເນົາເອກະສານ, ສິ່ງຂໍ້ມູນໃນເວັບໄຊທ໌, ສຽງ ແລະ ຮູບພາບອື່ນໆ) ໂດຍໄດ້ລະບຸກໍາມະສິດດັ້ງເດີມ ແລະ ຮັບຮູ້ຢ່າງຈະແຈ້ງດ້ວຍໂລໂກ້ ແລະ/ຫຼື ຊື່ອົງການທີ່ກ່ຽວຂ້ອງທີ່ປະກົດໃນເອກະສານສະບັບນີ້.

**<u>Disclaimer:</u>**

It has been compiled by Helvetas Laos and LIWG under the PIASVC project in January 2023.

In the spirit of promoting access to information, this document will be freely available to interested parties for non-commercial use only, using different means of communication and translation (printed hard copies, link on a website, audio-visual etc.) provided original ownership is clearly acknowledged with the respective logos and/or organization name.


<u>ປັບແກ້ ແລະ ປັບປຸງໂດຍ/ Revised and updated by:</u>

HELVETAS LAOS
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

<u>ໃຫ້ທຶນສະໜັບສະໜູນໂດຍ/ Funded by:</u>

Government of Japan
JSDF Japan Social Development Fund
THE WORLD BANK IBRD • IDA | WORLD BANK GROUP
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC

ຄະນະວິຊາການກວດກາຄູ່ມື:

1. ທ່ານ ປອ. ລີວາເມັງ ລີບົວປາວ ຮອງຫົວໜ້າກົມທີ່ດິນ ຫົວໜ້າ;
2. ທ່ານ ຄຳພັນ ປະວົງວຽງຄຳ ຫົວໜ້າພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ ຮອງຫົວໜ້າ;
3. ທ່ານ ນາງ ຈິດຕະກອນ ບຸນຄົງ ຫົວໜ້າພະແນກ ກົມກົດໝາຍ ກະຊວງຍຸຕິທຳ ຄະນະ;
4. ທ່ານ ປາວທ່າວ ຈາເພຍ ຫົວໜ້າພະແນກ, ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ ຄະນະ;
5. ທ່ານ ພູຊົງ ວັນນະຣາຊ ຮອງຫົວໜ້າພະແນກຄຸ້ມຄອງທະບຽນ ແລະປະເມີນລາຄາທີ່ດິນ ຄະນະ;
6. ທ່ານ ວິລະພັນ ຈັນທະວິສຸກ ຮອງຫົວໜ້າພະແນກບໍລິຫານ ກົມປ່າໄມ້ ຄະນະ;
7. ທ່ານ ນາງ ດວງໃຈ ຄູນໄຊດີດາ ຮອງຫົວໜ້າພະແນກກໍ່ສ້າງພັກ ແລະ ກົງຈັກການຈັດຕັ້ງ ກົມຈັດຕັ້ງ ແລະ ພະນັກງານ, ສນູກາງສະຫະພັນແມ່ຍິງລາວ ຄະນະ;
8. ທ່ານ ພູສິດ ສີວິໄລ ວິຊາການ ກົມທີ່ດິນ ຄະນະ;
9. ທ່ານ ແກ້ວອຸດອນ ທິບວົງໄຊ ວິຊາການ ກົມທີ່ດິນ ຄະນະ;
10. ທ່ານ ນາງ ສຸລິພອນ ບົວພັນ ວິຊາການ ກົມທີ່ດິນ ຄະນະ;
11. ທ່ານ ນາງ ລັດດາວັນ ວຽງຄຳສອນ ວິຊາການ ກົມທີ່ດິນ (ຜູ້ປະສານງານໂຄງການທະນາຄານໂລກ) ຄະນະ;
12. ທ່ານ ນາງ ອານຸສອນ ສີຫາລາດ ວິຊາການ ກົມທີ່ດິນ (ຜູ້ປະສານງານໂຄງການ Helvetas) ຄະນະ;
13. ທ່ານ ອານຸສອນ ອິນທາ ວິຊາການ ກົມກົດໝາຍ, ກະຊວງຍຸຕິທຳ ຄະນະ;
14. ທ່ານ ພຸດທະກອນ ຫຼວງລິດ ວິຊາການ ກົມຈັດຕັ້ງ ແລະ ພະນັກງານ, ສູນກາງສະຫະພັນແມ່ຍິງລາວ ຄະນະ;
15. ທ່ານ ສີວອນ ສອນທິປັນຍາ ວິຊາການ ກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ຄະນະ;
16. ທ່ານ ນາງ ວຽງຊຳ ຈັນທະວີໄຊ ວິຊາການ ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ ຄະນະ;
17. ທ່ານ ນາງ ວົງອາກອນ ເພັງດາລິດ ຮອງຫົວໜ້າກົມຈັດຕັ້ງ-ພະນັກງານ, ສູນກາງສະຫະພັນແມ່ຍິງລາວ ຄະນະ;
18. ທ່ານ ນາງ ວິໄລຈິດ ນິດທະວົງ ພະນັກງານວິຊາການ, ສູນກາງສະຫະ ພັນແມ່ຍິງລາວ ຄະນະ.

## ສາລະບານ


ຄໍານໍາ.......................................................................ERROR! BOOKMARK NOT DEFINED.

ການອະທິບາຍຄໍາສັບ ............................................................................................... 7

1. ປະຫວັດຄວາມເປັນມາຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຢູ່ ສປປ ລາວ ................................................ 12

2. ຄວາມໝາຍຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ .......................................................................... 12

3. ຄວາມສໍາຄັນຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ....................................................................... 13

4. ຈຸດປະສົງຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ............................................................................ 13

5. ທີ່ຕັ້ງ ແລະ ພາລະບົດບາດ ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ........................................................ 13

6. ສິດ ແລະ ໜ້າທີ່ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ..................................................................... 13

7. ໂຄງປະກອບບຸກຄະລາກອນ ...................................................................................... 14

8. ເຕັກນິກໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ............................................................................ 14

9. ຫຼັກການຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ............................................................................ 16

10. ຂັ້ນຕອນຂອງການໄກ່ເກ່ຍ .......................................................................................... 16

11. ຜູ້ເຂົ້າຮ່ວມການໄກ່ເກ່ຍຂໍ້ຂັດແຍ່ງ ................................................................................. 19

12. ສິ່ງທີ່ຄວນເອົາໃຈໃສ່ໃນການໄກ່ເກ່ຍຂໍ້ຂັດແຍ່ງ ........................................................................ 19

13. ກໍລະນີສຶກສາ ແລະ ແຜນວາດປະກອບໃນການເຂົ້າເຖິງກົນໄກການແກ້ໄຂຄໍາຮ້ອງທຸກ............................ 20

- ແຜນວາດການໃຫ້ຄໍາແນະນໍາຄູ່ກໍລະນີເຂົ້າສູ່ການແກ້ໄຂທາງບໍລິຫານ, ຕຸລາການ ແລະ ນິຕິບັນຍັດ (ການຮ້ອງທຸກ) ........... 21
- ແຜນວາດທີ 1: ຜົນຂອງການໄກ່ເກ່ຍ ແລະ ການໃຫ້ຄໍາແນະນໍາຄູ່ກໍລະນີ ............................................ 22
- ແຜນວາດທີ 2: ການໃຫ້ຄໍາແນະນໍາຄູ່ກໍລະນີເຂົ້າສູ່ການແກ້ໄຂທາງບໍລິຫານ.............................................. 22
- ແຜນວາດທີ 3: ການໃຫ້ຄໍາແນະນໍາຄູ່ກໍລະນີເຂົ້າສູ່ການແກ້ໄຂທາງຕຸລາການ (ສານປະຊາຊົນ, ຄະດີແພ່ງ)..................... 25
- ແຜນວາດທີ 4: ການໃຫ້ຄໍາແນະນໍາຄູ່ກໍລະນີເຂົ້າສູ່ການແກ້ໄຂທາງຕຸລາການ(ສານປະຊາຊົນ, ຄະດີປົກຄອງ) ................. 26
- ແຜນວາດທີ 5: ການໃຫ້ຄໍາແນະນໍາຄູ່ກໍລະນີເຂົ້າສູ່ການແກ້ໄຂທາງນິຕິບັນຍັດ ......................................... 28

14. ການບໍລິການໃຫ້ຄໍາປຶກສາ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ ................................................ 30

- ❖ ການຊ່ວຍເຫຼືອທາງດ້ານກົດໝາຍແບບສະໝັກໃຈ ຫຼື ຈິດອາສາທາງດ້ານ ກົດໝາຍ (PRO BONO) .................... 30
- ❖ ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ (LEGAL AID)............................................................ 31
- ❖ ບຸກຄົນໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ........................................................................... 31
- ❖ ຊ່ອງທາງການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ໂດຍບໍ່ເສຍຄ່າ ................................................ 31

ເອກະສານຊ້ອນທ້າຍ ............................................................................................... 31

**ຄຳນຳ**

ຄູ່ມື ຝຶກອົບຮົມ ການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການໃຫ້ຄຳປຶກສາທາງດ້ານກົດໝາຍ ກ່ຽວກັບ ທີ່ດິນ ຢູ່ຂັ້ນບ້ານ ສະບັບນີ້ ສ້າງຂຶ້ນ ໂດຍການຄົ້ນຄວ້າຮ່ວມກັນ ລະຫວ່າງ ຄະນະວິຊາການຂັ້ນສູນກາງ ຊຶ່ງປະກອບມີບັນດາທ່ານຜູ້ຕາງໜ້າ ຈາກກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້, ກົມກົດໝາຍ ແລະ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ກະຊວງຍຸຕິທຳ, ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ ແລະ ກົມຈັດຕັ້ງ-ພະນັກງານ ສູນກາງສະຫະພັນແມ່ຍິງລາວ ແລະ ທີ່ປຶກສາໂຄງການ ຊຶ່ງຈຸດປະສົງຂອງຄູ່ມືສະບັບນີ້ ແມ່ນເພື່ອເປັນ ຄູ່ມືຝຶກອົບຮົມໃຫ້ພະນັກງານ ຢູ່ຂັ້ນທ້ອງຖິ່ນ (ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫລື ອາສາສະໝັກດ້ານກົດໝາຍປະຈຳບ້ານ) ໃນການສະໜອງຂໍ້ມູນດ້ານກົດໝາຍ ແລະ ການບໍລິການໃຫ້ຄຳປຶກສາທາງດ້ານກົດໝາຍໃຫ້ປະຊາຊົນ ຢູ່ບັນດາບ້ານເປົ້າໝາຍຂອງໂຄງການ ຊຶ່ງຈະຈັດຕັ້ງປະຕິບັດ ຢູ່ແຂວງບໍລິຄຳໄຊ (12 ບ້ານ ຂອງເມືອງ ປາກກະດິງ ແລະ 12 ບ້ານ ຂອງເມືອງ ບໍລິຄັນ) ແລະ ແຂວງຊຽງຂວາງ (10 ບ້ານຂອງ ເມືອງ ຜາໄຊ, 7 ບ້ານ ຂອງເມືອງ ຄູນ ແລະ 7 ບ້ານ ຂອງເມືອງ ໝອກ) ຊຶ່ງຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ລວມທັງອາສະໝັກດ້ານກົດໝາຍປະຈຳບ້ານ ທີ່ຖືກແຕ່ງຕັ້ງໂດຍອີງການປົກຄອງບ້ານ ຈະໄດ້ຮັບການຝຶກອົບຮົມ ຈາກພາກລັດທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ແລະ ບັນດາສາມະຄົມ (ສະມາຄົມເພື່ອການພັດທະນາແມ່ຍິງ ແລະ ການສຶກສາດ້ານກົດໝາຍ, ສະມະມາຄົມພັດທະນາຄົນພິການ ແຂວງຊຽງຂວາງ, ສະມາຄົມລາວພັດທະນາ ຊັບພະຍາກອນມະນຸດ ໃນເຂດຊົນນະບົດ ແລະ ສະມາຄົມ ພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ ທີ່ຮ່ວມຈັດຕັ້ງປະຕິບັດ ໂຄງການຍ່ອຍ.

**ຄະນະຮັບຜິດຊອບ**

## ການອະທິບາຍຄຳສັບ

1. **ຂໍ້ຂັດແຍ່ງ**

ແມ່ນຄວາມບໍ່ຖືກຕ້ອງປອງດອງກັນ, ຄວາມບໍ່ເຂົ້າໃຈກັນ, ບໍ່ສາມາດ ຕົກລົງ ຫຼື ບໍ່ ລົງລອຍກັນ ທີ່ເກີດຂຶ້ນ ລະຫວ່າງ ບຸກຄົນ ກັບ ບຸກຄົນ, ບຸກຄົນ ກັບ ການຈັດຕັ້ງ ກ່ຽວກັບສາຍພົວພັນ ທາງແພ່ງ, ການຄ້າ, ຄອບຄົວ, ແຮງງານ, ສິ່ງແວດລ້ອມ, ຂໍ້ຂັດແຍ່ງອື່ນທີ່ກຳນົດໄວ້ໃນກົດໝາຍ ແລະ ການລະເມີດກົດໝາຍ ອາຍາ ທີ່ກົດໝາຍອະນຸຍາດໃຫ້ໄກ່ເກ່ຍ;

ຄວາມສຳພັນ ຂອງບຸກຄົນ ຫຼື ກຸ່ມຄົນ ຕັ້ງແຕ່ 2 ຝ່າຍຂຶ້ນໄປ ຊຶ່ງມີຄວາມຕ້ອງການຜົນປະໂຫຍດ, ເປົ້າໝາຍ ຫຼື ຄ່ານິຍົມທີ່ແຕກຕ່າງກັນ ບໍ່ວ່າຈະເປັນພຽງການຮັບຮູ້ ຫຼື ເກີດຄວາມຂັດແຍ່ງແທ້ໆ ຫຼື ມີຄວາມຮຸນແຮງເກີດຂຶ້ນ.

**ຂັດແຍ່ງ** ເປັນຂັ້ນຕອນໃນການຮັບຮູ້ເຖິງເປົ້າໝາຍ ທີ່ບໍ່ສອດຄ່ອງກັນ ລະຫວ່າງ ບຸກຄົນ ຫຼື ກຸ່ມຄົນໃນສັງຄົມ ເປັນທຳມະຊາດປະຕິສຳພັນ ລະຫວ່າງ ມະນຸດອາດເປັນຜົນດີ ຕໍ່ກຸ່ມ ຫຼື ສັງຄົມ ແລະ ສາມາດແກ້ໄຂໄດ້.

2. **ຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ແມ່ນຂໍ້ພິພາດທາງດ້ານຜົນປະໂຫຍດ ລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ ຫຼື ກັບການຈັດຕັ້ງ, ບຸກຄົນກັບບຸກຄົນ, ບຸກຄົນກັບການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກ ການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ.

3. **ບັນຫາ ຫຼື ຂໍ້ຂັດແຍ່ງທາງດ້ານ ບໍລິຫານ ກ່ຽວກັບທີ່ດິນ**

ແມ່ນ ບັນຫາ ຫຼື ຂໍ້ຂັດແຍ່ງ ກ່ຽວກັບການນຳໃຊ້ທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງ ທີ່ໄດ້ຮັບມອບ, ບໍ່ເສຍອາກອນ, ຄ່າທຳນຽມການນຳໃຊ້ທີ່ດິນ, ເຂດແດນ ແລະ ບັນຫາທີ່ດິນອື່ນ ທີ່ມີລັກສະນະບໍລິຫານ ຕາມກົດໝາຍ (ກົດໝາຍ ວ່າດ້ວຍ ທີ່ດິນ).

4. **ຂໍ້ຂັດແຍ່ງທາງດ້ານສິດ ແລະ ຜົນປະໂຫຍດ**

ແມ່ນ ຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການທີ່ຝ່າຍໃດຝ່າຍໜຶ່ງ ບໍ່ຕອບສະໜອງຕາມການຮ້ອງຂໍສິດ ແລະ ຜົນປະໂຫຍດອັນໃໝ່ ຈາກອີກຝ່າຍໜຶ່ງໄດ້ (ມາດຕາ 8, ດຳລັດ ວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ).

ແມ່ນຂໍ້ຂັດແຍ່ງ ລະຫວ່າງ ກຳມະກອນ ຫຼື ຊາວຜູ້ອອກແຮງງານອື່ນ ກັບຜູ້ໃຊ້ແຮງງານ ກ່ຽວກັບບັນຫາສິດ ແລະ ຜົນປະໂຫຍດ ໃນເວລາປະຕິບັດສັນຍາແຮງງານ (ມາດຕາ 41 ກົດໝາຍ ວ່າດ້ວຍກຳມະບານລາວ ປີ 2017).

5. **ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ**

ແມ່ນ ຂໍ້ຂັດແຍ່ງກ່ຽວກັບສິດນຳໃຊ້ທີ່ດິນ, ການຮ້ອງຂໍທາງຜ່ານ, ມູນມໍຣະດົກ, ກຳມະສິດກ່ຽວກັບສັດລ້ຽງ, ການລະເມີດສັນຍາທີ່ບໍ່ມີລັກສະນະການຄ້າ, ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງດ້ານບໍລິຫານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງບ້ານ ແລະ ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ).

ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການປຸກສ້າງ ຫຼື ການກໍ່ສ້າງທີ່ບໍ່ຖືກຕ້ອງຕາມລະບຽບການຂອງຜັງເມືອງ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ຫຼື ການຈັດຕັ້ງ ແລະ ການລະເມີດອື່ນໆກ່ຽວກັບຜັງເມືອງທີ່ມີ ລັກສະນະທາງແພ່ງ (ມາດຕາ 45 ກົດໝາຍ ວ່າດ້ວຍ ຜັງເມືອງ ປີ 1999).

6. **ການສຶກສາອົບຮົມ**

ແມ່ນການໃຫ້ຄວາມຮູ້ທາງດ້ານກົດໝາຍ, ຮີດຄອງປະເພນີອັນດີງາມຂອງຊາດ, ການຕັກເຕືອນ ຄູ່ກໍລະນີ.

**7. ການປະນີປະນອມ**

ແມ່ນການຜ່ອນສັ້ນຜ່ອນຍາວ, ການໂຍະຍານ, ການໃຫ້ອະໄພ ຊຶ່ງກັນ ແລະ ກັນ.

**8. ການໄກ່ເກ່ຍ**

ແມ່ນຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີ ດ້ວຍການປຶກສາຫາລື, ປະນີປະນອມ ແລະ ເຈລະຈາ ຊຶ່ງດຳເນີນໂດຍຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ (ມາດຕາ 25 ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ປີ 2018).

**9. ການໃຫ້ຄຳປຶກສາທາງດ້ານກົດໝາຍ**

ແມ່ນການແນະນຳ, ອະທິບາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນ ກ່ຽວກັບກົດໝາຍທີ່ກ່ຽວຂ້ອງກັບການຮ້ອງຂໍ (ມາດຕາ 9; ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ)

**10. ເດັກ**

ແມ່ນບຸກຄົນທີ່ມີອາຍຸຕ່ຳກວ່າສິບແປດປີ;

**11. ຊົນຊາວ**

ແມ່ນຊຸມຊົນໜຶ່ງທີ່ປະກອບສ້າງເປັນສາຍເລືອດດຽວກັນ ຕາມເຊື້ອບິດາ.

**12. ຊຸມຊົນທີ່ໄດ້ຮັບຜົນກະທົບ**

ແມ່ນຊຸມຊົນ ຫຼື ທ້ອງຖິ່ນທີ່ຕັ້ງຢູ່ໃນເຂດໂຄງການ ແລະ ເຂດໃກ້ຄຽງ ທີ່ໄດ້ຮັບຜົນກະທົບທາງກົງ ຫຼື ທາງອ້ອມຕໍ່ການດຳລົງຊີວິດ, ການເຂົ້າເຖິງຊັບພະຍາກອນ, ສຸຂະພາບ, ສະຫວັດດີການ, ສະພາບແວດລ້ອມທຳມະຊາດ ຈາກກິດຈະກຳຂຸດຄົ້ນບໍ່ແຮ່ (ມາດຕາ 3; ກົດໝາຍ ວ່າດ້ວຍແຮ່ທາດ ປີ 2017).

**13. ຄຳຮ້ອງທຸກ**

ແມ່ນເອກະສານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ເພື່ອໃຫ້ກວດກາ, ພິຈາລະນາ ແລະ ແກ້ໄຂ ກ່ຽວກັບການກະທຳຂອງບຸກຄົນ ຫຼື ການເຄື່ອນໄຫວຂອງນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ຕົນເຫັນວ່າ ເປັນການລະເມີດກົດໝາຍ, ບໍ່ໄດ້ຮັບຄວາມຍຸຕິທຳ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ (ມາດຕາ 2; ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ປີ 2022);

**14. ຄຳສະເໜີ**

ແມ່ນ ເອກະສານ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ ອົງການປົກຄອງ ທ້ອງຖິ່ນ ຫຼື ລັດຖະບານ ເພື່ອໃຫ້ກວດກາ, ພິຈາລະນາ ແລະ ແກ້ໄຂ ກ່ຽວກັບການກະທຳ ຂອງບຸກຄົນ ຫຼື ການເຄື່ອນໄຫວ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ເຫັນວ່າ ເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍໃຫ້ ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

**15. ການຮ້ອງຂໍ**

ແມ່ນການສະເໜີໃຫ້ສານພິຈາລະນາແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ (ມາດຕາ 3; ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ປີ 2012);

**16. ການຮ້ອງຟ້ອງ**

ແມ່ນການສະເໜີໃຫ້ສານພິຈາລະນາ ຮັບຮູ້, ຢັ້ງຢືນ ຫຼື ປະກາດ ກ່ຽວກັບບັນຫາໃດໜຶ່ງ ທີ່ບໍ່ເປັນຂໍ້ຂັດແຍ່ງ ເຊັ່ນ ການຮັບຮູ້ເປັນຜູ້ຫາຍສາບສູນ, ການຢັ້ງຢືນໃບຕາດິນ ເສຍຫາຍ ຫຼື ການປະກາດເປັນຜູ້ເສຍຊີວິດ (ມາດຕາ 3; ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ປີ 2012);

**17. ຄຳຮ້ອງຟ້ອງ**

ແມ່ນເອກະສານຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ສານ ໂດຍອ້າງວ່າຕົນ ໄດ້ຮັບຄວາມເສັຍຫາຍ ຍ້ອນຖືກ ຜູ້ອື່ນ ລະເມີດ ຫຼື ໂຕ້ແຍ່ງສິດ ແລະ ຜົນປະໂຫຍດຂອງຕົນ (ມາດຕາ 166; ກົດໝາຍ ວ່າດ້ວຍ ການດຳເນີນຄະດີແພ່ງ ປີ 2012);

**18. ຄຳຮ້ອງຂໍຄວາມເປັນທຳ**

ແມ່ນ ເອກະສານຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ເພື່ອໃຫ້ ກວດກາ ແລະ ພິຈາລະນາກ່ຽວກັບການຕົກລົງ ຂອງ ອົງການປົກຄອງທ້ອງຖິ່ນ, ລັດຖະບານ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ທີ່ເຫັນວ່າ ການແກ້ໄຂນັ້ນ ເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນ ປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ (ມາດຕາ 2; ກົດໝາຍ ວ່າ ດ້ວຍການແກ້ໄຂຄຳຮ້ອງທຸກ ປີ 2022);

**19. ກົດໝາຍ**

ແມ່ນ ນິຕິກຳທີ່ສ້າງຂຶ້ນໂດຍອົງການທີ່ມີສິດອຳນາດ, ຮັບຮອງເອົາໂດຍສະພາແຫ່ງຊາດ ແລະ ປະກາດໃຊ້ໂດຍປະທານປະເທດ ຊຶ່ງກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ແນໃສ່ດັດປັບ ສາຍພົວພັນສັງຄົມໃນຫຼາຍຂົງເຂດ ຫຼື ຂົງເຂດໃດໜຶ່ງ ຊຶ່ງມີຜົນບັງຄັບໃນຂອບເຂດທົ່ວປະເທດ ແລະ ນຳ ໃຊ້ ຢ່າງຍາວນານ ( ມາດຕາ 16; ກົດໝາຍ ວ່າດ້ວຍການສ້າງນິຕິກຳ ປີ 2021);

**20. ກົດໝາຍແພ່ງ**

ແມ່ນບັນດາຂໍ້ກຳນົດກົດໝາຍ ທີ່ດັດປັບສາຍພົວພັນທີ່ມີລັກສະນະຊັບສິນບັດ ແລະ ສາຍພົວພັນ ສ່ວນຕົວ ທີ່ບໍ່ມີລັກສະນະຊັບສິນບັດຕິດພັນ (ແລະ ບາງອັນກໍບໍ່ຕິດພັນ) ກັບສາຍພົວພັນທີ່ມີລັກສະນະ ຊັບສິນ ບັດ ບົນພື້ນຖານ ຄວາມສະເໝີພາບລະຫວ່າງຜູ້ເຂົ້າຮ່ວມໃນສາຍພົວພັນດັ່ງກ່າວ ຫຼື ກົດໝາຍແພ່ງ ປົກປ້ອງ, ຄຸ້ມກັນຂໍ້ຂັດແຍ່ງ ໃນສາຍພົວພັນກ່ຽວກັບຊັບ, ວັດຖຸສິ່ງຂອງ ແລະ ສາຍພົວພັນກ່ຽວກັບສິດ ສ່ວນຕົວທີ່ບໍ່ ເປັນວັດຖຸ ຂອງແຕ່ລະຄົນ (ຕຳລາສອນກົດໝາຍແພ່ງ ລາວ, 2008);

**21. ກົດໝາຍອາຍາ**

ແມ່ນລະບົບບັນດາຂໍ້ກຳນົດທີ່ວາງອອກ ແລະ ຮັບປະກັນການປະຕິບັດໂດຍລັດ, ຊຶ່ງກຳນົດບັນດາ ພຶດຕິກຳທີ່ວ່າ ເປັນການກະທຳຜິດທາງອາຍາ, ກຳນົດໂທດ ແລະ ຂອບເຂດຂອງການລົງໂທດ, ກຳນົດ ເງື່ອນໄຂ ແລະ ວິທີການ ກ່ຽວກັບການວາງໂທດ, ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ແລະ ເງື່ອນໄຂກ່ຽວກັບ ການພົ້ນຈາກການປະຕິບັດໂທດ (ຕຳລາສອນກົດໝາຍອາຍາ ລາວ, 2009);

**22. ຄະດີແພ່ງ**

ແມ່ນຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທີ່ມີລັກສະນະຊັບສິນບັດ ເຊັ່ນ: ກຳມະສິດກ່ຽວກັບວັດຖຸສິ່ງ ຂອງ, ເງິນ, ຄຳ, ຊັບສິນທາງປັນຍາ ແລະ ບາງສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະຊັບສິນບັດ ເຊັ່ນ: ຊື່, ນາມສະກຸນ, ກຽດສັກສີ (ມາດຕາ 2 ກົດໝາຍ ການດຳເນີນຄະດີແພ່ງ, 2012).

**23. ຄະດີອາຍາ**

ແມ່ນຄະດີ ກ່ຽວກັບການກະທຳ ຫຼື ການເມີນເສີຍ ທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມຂອງ ສປປ ລາວ, ຕໍ່ກຳມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ, ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ, ຄວາມເປັນລະບຽບ ຮຽບຮ້ອຍ ຂອງສັງຄົມ ຊຶ່ງບົ່ງໄວ້ໃນປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນຂອງ ສປປ ລາວ ທີ່ໄດ້ ກຳນົດໂທດທາງ ອາຍາ (ມາດຕາ 2 ກົດໝາຍ ການດຳເນີນຄະດີອາຍາ, 2017).

**24. ການດຳເນີນຄະດີແພ່ງ**

ແມ່ນການເຄື່ອນໄຫວຂອງສານ ແລະ ຂອງຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ ເພື່ອພິຈາລະນາແກ້ໄຂ ການຮ້ອງຟ້ອງ ແລະ ການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຂໍ້ຂັດແຍ່ງອື່ນ ຕາມທີ່ໄດ້ກຳ ນົດໄວ້ໃນລະບຽບກົດໝາຍ, ການດຳເນີນຄະດີແພ່ງ ແມ່ນລວມທັງ ຄະດີການຄ້າ, ຄອບຄົວ, ເດັກ ແລະ ແຮງງານ (ມາດຕາ 2 ກົດໝາຍ ການດຳເນີນຄະດີແພ່ງ, 2012);

**25. ການດຳເນີນຄະດີອາຍາ**

ແມ່ນການເຄື່ອນໄຫວ ຂອງອົງການສືບສວນ-ສອບສວນ, ອົງການໄອຍະການ, ສານ ແລະ ຜູ້ເຂົ້າຮ່ວມອື່ນ ເພື່ອຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ກະທຳຜິດ ມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ, ຜູ້ກະທຳຜິດ ຕ້ອງຖືກລົງໂທດ ຕາມກົດໝາຍ, ຜູ້ບໍ່ກະທຳຜິດ ຈະບໍ່ຖືກລົງໂທດ (ມາດຕາ 2 ກົດໝາຍ ການດຳເນີນຄະດີ ອາຍາ, 2017);

**26. ຄວາມຍຸຕິທຳ**

ແມ່ນຫຼັກການພື້ນຖານທີ່ຮັບປະກັນການປະຕິບັດທີ່ມີຄວາມເປັນທຳ, ເປັນກາງ, ມີຄວາມສະເໝີພາບ, ບໍ່ມີຄວາມລຳອຽງເຂົ້າຂ້າງຝ່າຍໃດຝ່າຍໜຶ່ງ ດ້ວຍການພິສູດຄວາມຈິງ ແລະ ຕັດສິນໂດຍອີງໃສ່ຂໍ້ມູນຫຼັກຖານ ບົນພື້ນຖານຂອງລະບຽບກົດໝາຍຫຼາຍກວ່າ ການນຳໃຊ້ຄວາມຄິດເຫັນສ່ວນຕົວ.

ຄວາມຍຸຕິທຳ ເປັນແນວຄວາມຄິດກ່ຽວກັບຄວາມຖືກຕ້ອງ ຕາມສິນທຳບົນພື້ນຖານຂອງຈັນຍາທຳ, ຄວາມສົມ ເຫດສົມຜົນ, ກົດໝາຍ, ກົດທຳມະຊາດ, ສາດສະໜາ, ຄວາມທ່ຽງທຳ (equity) ແລະ ຄວາມເປັນທຳ (fairness)

ຄວາມຍຸຕິທຳ ປຽບເໝືອນຫົວໃຈຂອງກົດໝາຍທີ່ບໍ່ສາມາດແຍກອອກຈາກກັນໄດ້ ເພາະກົດໝາຍຈະຄົງຢູ່ ໄດ້ດ້ວຍຄວາມຍຸຕິທຳ ແລະ ກົດໝາຍຈະສິ້ນສຸດລົງ ຫຼື ຖືກຍົກເລີກ ແມ່ນມີແຕ່ສະພາແຫ່ງຊາດ ເທົ່ານັ້ນ ສ່ວນນິຕິກຳລຸ່ມກົດໝາຍແມ່ນອົງການລັດທີ່ກ່ຽວຂ້ອງ (ອົງການ ບໍລິຫານ, ອົງການຕຸລາການ) ໃນຂະນະດຽວກັນ ການໃຊ້ຄວາມຍຸຕິທຳຕ້ອງອາໄສກົດໝາຍເປັນເຄື່ອງມື ເພື່ອໃຫ້ມີຄວາມເປັນຮູບປະທຳຫຼາຍຂຶ້ນ ແລະ ສາມາດບັງຄັບໃຫ້ປະຕິບັດຕາມໄດ້.

**27. ການເຂົ້າເຖິງຄວາມຍຸຕິທຳ**

ແມ່ນຄວາມສາມາດຂອງປະຊາຊົນ ໃນການຊອກຫາ ແລະ ໄດ້ຮັບຄວາມຍຸຕິທຳຂອງພວກເຂົາເຈົ້າ ໂດຍຜ່ານສະຖາບັນຍຸຕິທຳທີ່ເປັນທາງການ ແລະ ບໍ່ເປັນທາງການ ໂດຍສອດຄ່ອງກັບມາດຖານທາງດ້ານສິດທິມະ ນຸດ" (UNDP, 2005:5).

ການເຂົ້າເຖິງຄວາມຍຸຕິທຳ ເປັນວິທີໜຶ່ງ ທີ່ຈະຮັບປະກັນວ່າ ປະຊາຊົນ ໂດຍສະເພາະ ຜູ້ທີ່ດ້ອຍໂອກາດ ສາ ມາດໄດ້ຮັບຜົນປະໂຫຍດ ຈາກການນຳໃຊ້ສິດທິຂອງຕົນເອງ ເພື່ອຫຼຸດຜ່ອນຄວາມບໍ່ສະເໝີພາບໃນສັງຄົມ, ຊຸກຍູ້ການຂະຫຍາຍຕົວທາງດ້ານເສດຖະກິດໃນຂັ້ນຮາກຖານ ແລະ ເສີມຂະຫຍາຍຄວາມສາ ມັກຄີຮັກແພງ ແລະ ສະຖຽນລະພາບໃນສັງຄົມ"

ການເຂົ້າເຖິງຄວາມຍຸຕິທຳ ແມ່ນສິດພື້ນຖານຂອງພົນລະເມືອງ ແລະ ການນຳໃຊ້ສິດຢ່າງເຕັມສ່ວນໂດຍປາສະຈາກຂໍ້ສົງໄສ, ການຢັ້ງຢືນຄວາມບໍລິສຸດ, ການປົກປ້ອງສິດ ແລະ ເສລີພາບ, ຜົນປະໂຫຍດອັນຊອບທຳຂອງບຸກຄົນໃດໜຶ່ງທີ່ໄດ້ຮັບຜົນກະທົບ ແລະ ຄວາມກັງວົນອື່ນໆ.

**28. ຂະບວນການຍຸຕິທຳ**

ແມ່ນຂັ້ນຕອນ ແລະ ວິທີດຳເນີນການທາງດ້ານກົດໝາຍ ດ້ວຍການຜ່ານ ອົງການສືບສວນ-ສອບສວນ,ອົງການໄອຍະການປະຊາຊົນ ແລະ ການພິຈາລະນາຕັດສິນຂອງສານປະຊາຊົນ ເຊິ່ງແນໃສ່ການເຮັດໃຫ້ສັງຄົມມີຄວາມສະຫງົບສຸກ, ແກ້ໄຂບັນຫາຂໍ້ຂັດແຍ່ງທີ່ເກີດຂຶ້ນ, ຊອກໃຫ້ເຫັນຂໍ້ເທດຈິງຂອງບັນຫາ ແລະ ເຫດການທີ່ເກີດຂຶ້ນ ວ່າເນື່ອງມາຈາກສາເຫດໃດ ໂດຍອີງຕາມ ລະບຽບກົດໝາຍ ໃນການພິຈາລະນາແກ້ໄຂບັນຫາ.

ແມ່ນ ການດຳເນີນການສືບສວນ - ສອບສວນ, ສອບຖາມ, ການສຳພາດ, ການໄກ່ເກັ່ຍ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ການນຳໃຊ້ມາດຕະການຕ່າງໆ ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ແລະ ການພິຈາລະນາຕັດສິນຂອງສານ (ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ມາດຕາ 30 ການແກ້ໄຂຄະດີເດັກ ຕາມຂະບວນການຍຸຕິທຳ).

**29. ການຄຸ້ມຄອງລັດດ້ວຍກົດໝາຍ**

ແມ່ນ ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ແມ່ນຄວາມຈຳເປັນພາວະວິໄສຂອງທຸກໆ ລັດໃນຍຸກປັດຈຸບັນ ເພື່ອກຳນົດມາດຕະຖານສຳລັບການດຳລົງຊີວິດຂອງຄົນໃນສັງຄົມ ຂອງປະເທດໃຫ້ຢູ່ຮ່ວມກັນໂດຍສັນຕິ ແລະ ຍຸຕິທຳ. ສະນັ້ນ, ກົດໝາຍຈຶ່ງກາຍເປັນເຄື່ອງມື ເພື່ອດັດປັບການພົວພັນສັງຄົມ, ຮັບປະກັນຄວາມສະເໝີພາບ ແລະ ຄວາມຍຸຕິທຳໃຫ້ແກ່ທຸກຊັ້ນຄົນໃນສັງຄົມ.

ແມ່ນການປົກຄອງທີ່ບຸກຄົນ, ສະຖາບັນ, ແລະ ນິຕິບຸກຄົນ ທັງໝົດມີຄວາມສະເໝີພາບຕໍ່ໜ້າກົດໝາຍ. ລັດທີ່ປົກຄອງດ້ວຍຫຼັກການນີ້ແມ່ນຈະໃຫ້ສິດ ແລະ ຄວາມສຳຄັນກັບທຸກຄົນໃນສັງຄົມ ບໍ່ມີບຸກຄົນໃດ ທີ່ມີສິດອຳນາດ ຫຼື ຢູ່ເໜືອກົດໝາຍໄດ້. ສານມີບົດບາດສຳຄັນໃນການນຳໃຊ້ລະບຽບກົດໝາຍແບບເທົ່າທຽມ ເພື່ອສິດ ແລະ ຜົນປະໂຫຍດຂອງທຸກຄົນໃນສັງຄົມ.

ເປັນພື້ນຖານເພື່ອກ້າວໄປສູ່ການປົກຄອງທີ່ດີ, ເຊິ່ງເປັນບັນຫາທີ່ສຳຄັນ ແລະ ເປັນບັນຫາປິ່ນອ້ອມ ໃນການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດສັງຄົມແຫ່ງຊາດໃຫ້ບັນລຸເປົ້າໝາຍໄດ້ ສະນັ້ນ, ການຄຸ້ມຄອງລັດດ້ວຍກົດໝາຍ ແມ່ນເສົາຄ້ຳທີ່ສຳຄັນ ແລະ ເປັນພື້ນຖານທີ່ເຂັ້ມແຂງ ຂອງການປົກຄອງທີ່ດີ ແລະ ຊຸກຍູ້ໃຫ້ປະຊາຊົນ/ພົນລະເມືອງ ໄດ້ເຂົ້າເຖິງກົດໝາຍ ແລະ ຄວາມຍຸຕິທຳ ຫຼາຍຂຶ້ນ.

## 1. ປະຫວັດຄວາມເປັນມາຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຢູ່ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດທີ່ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມໃນຫຼາຍໆດ້ານ, ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ກໍເປັນວັດທະນາທຳ ແລະ ຮີດຄອງປະເພນີອັນດີງາມ ອັນໜຶ່ງ ທີ່ດຳລົງຄົງຕົວ, ຂະຫຍາຍຕົວຢູ່ໃນສັງຄົມລາວ ແລະ ໄດ້ຮັບການສືບທອດມາຈົນເຖິງເທົ່າທຸກວັນນີ້.

ກ່ອນຍັງບໍ່ທັນມີກົດໝາຍ ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນໄດ້ອາໄສຜູ້ຊົງຄຸນວຸດທິ, ເຈົ້າກົກເຈົ້າເຫຼົ່າ ຫຼື ຜູ້ທີ່ຄູ່ກໍລະນີໃຫ້ການເຄົາລົບນັບເພື່ອເປັນຄົນກາງຊ່ວຍໃນການໄກ່ເກ່ຍໃຫ້, ໂດຍອີງໃສ່ວັດທະນາທຳ, ຮີດຄອງປະເພນີ, ຄວາມຊິນເຄີຍ ແລະ ລະບຽບການດຳລົງຊີວິດຂອງສັງຄົມເປັນບ່ອນອີງໃນການໄກ່ເກ່ຍ. ອັນໄດ້ເປັນການຟື້ນຟູ ຄວາມຮັກແພງສາມັກຄີປອງດອງລະຫວ່າງປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນ ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ ໃນໄລຍະນັ້ນ.

ໃນປີ 1997 ລັດຖະບານ ໄດ້ມອບໃຫ້ກະຊວງຍຸຕິທຳ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງ ກ່ຽວກັບວຽກງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. ສະນັ້ນ, ກະຊວງຍຸຕິທຳ ຈຶ່ງໄດ້ຄົ້ນຄວ້າ ແລະ ອອກຂໍ້ຕົກລົງຂອງລັດຖະມົນ ຕີກະຊວງຍຸຕິທຳ ສະບັບເລກ ທີ304/ກຍ, ລົງວັນທີ 15 ກໍລະກົດ 1997 ວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຊຶ່ງເປັນນິຕິກຳບ່ອນອີງພື້ນຖານໃຫ້ມີການສ້າງຕັ້ງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຂຶ້ນໃນທຸກໆບ້ານໃນຂອບເຂດທົ່ວປະເທດ. ຕໍ່ມາຈຶ່ງໄດ້ປັບປຸງຂໍ້ຕົກລົງດັ່ງກ່າວ ແລະ ນິຕິກຳທີ່ກ່ຽວຂ້ອງໃນແຕ່ລະໄລຍະ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມໃນແຕ່ລະໄລຍະ;

ຕົກມາໃນປີ 2016 ນາຍົກລັດຖະມົນຕ ໄດ້ອອກຂໍ້ຕົກລົງວ່າດ້ວຍການສ້າງຕັ້ງຄະນະແກ້ໄຂ ຂໍ້ຂັດແຍ່ງຂັ້ນບ້ານ ສະບັບເລກທີ 01 /ນຍ, ລົງວັນທີ 6 ມັງກອນ 2016 . ສະນັ້ນ, ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂໍ້ຕົກລົງສະບັບດັ່ງກ່າວ, ລັດຖະມົນຕີກະຊວງຍຸຕິທຳ ກໍໄດ້ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດ ແຍ່ງຂັ້ນບ້ານສະບັບເລກທີ 404/ກຍ, ລົງວັນທີ່ 28 ພຶດສະພາ 2016.

ມາຮອດປີ 2021 ນາຍົກລັດຖະມົນຕີ ໄດ້ອອກດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສະບັບເລກທີ 626/ນຍ, ລົງວັນທີ 22 ຕຸລາ 2021. ສະນັ້ນ, ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດຳລັດສະບັບດັ່ງກ່າວ, ລັດຖະມົນຕີກະຊວງຍຸຕິທຳ ກໍໄດ້ປະກາດໃຊ້ປຶ້ມຄູ່ມືການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ (ສຳລັບຜູ້ໄກ່ເກ່ຍ ແລະໜ່ວຍໄກ່ເກ່ຍ) ສະບັບລົງວັນທີ່ 9 ມິຖຸນາ 2022 ເພື່ອເປັນບ່ອນອີງໃຫ້ແກ່ພະນັກງານ ແລະ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໃນການຈັດຕັ້ງປະຕິບັດໃຫ້ມີຄຸນະພາບ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

## 2. ຄວາມໝາຍຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງ ເຊິ່ງດຳເນີນໂດຍໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ດ້ວຍການສຶກສາອົບຮົມ, ຊ່ວຍເຫຼືອ, ແນະນຳ ຄູ່ກໍລະນີ ໃຫ້ມີຄວາມຕື່ນຕົວປະນີປະນອມ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງນຳກັນ.

ເມື່ອເວົ້າເຖິງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ອາດມີຫຼາຍຄວາມໝາຍທີ່ແຕກຕ່າງກັນ ຊຶ່ງຂຶ້ນຢູ່ກັບຄວາມເຂົ້າໃຈ ແລະ ຄວາມຮັບຮູ້ທີ່ແຕກຕ່າງກັນ.

ສຳລັບຢູ່ ສປປ ລາວ ໄດ້ໃຫ້ຄວາມໝາຍ ກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງວ່າ ແມ່ນການສຶກສາອົບຮົມ ແລະ ປະນີປະນອມຄູ່ກໍລະນີທີ່ຂັດແຍ່ງກັນ ແນ່ໃສ່ເຮັດໃຫ້ເຂົາເຈົ້າມີຄວາມເຂົ້າໃຈກັນ ແລະ ຕົກລົງ ຫຼື ຍິນຍອມແກ້ໄຂບັນຫາຄວາມຂັດແຍ່ງຮ່ວມກັນ ໂດຍສັນຕິວິທີ, ສະເໝີພາບ ແລະ ມີຄວາມຍຸຕິທຳບົນພື້ນຖານຄວາມພໍອົກພໍໃຈຂອງທາງສອງຝ່າຍ.

## 3. ຄວາມສຳຄັນຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ເນື່ອງຈາກວ່າ ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເປັນວິທີການແກ້ໄຂ ທີ່ດຳເນີນໄປດ້ວຍວິທີການສຶກສາອົບຮົມ ຄູ່ກໍລະນີທີ່ຂັດແຍ່ງກັນ. ສະນັ້ນ, ການແກ້ໄຂດ້ວຍວິທີການດັ່ງກ່າວ ລ້ວນແຕ່ມີຄວາມສຳຄັນໃຫ້ແກ່ລັດ-ສັງຄົມ, ຄອບຄົວ ແລະ ຄູ່ກໍລະນີ. ຊຶ່ງສະແດງອອກ:

1) ເປັນການປະກອບສ່ວນເຂົ້າໃນວຽກງານການສ້າງລັດທີ່ປົກຄອງດ້ວຍກົດໝາຍ, ເວົ້າສະເພາະແມ່ນຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ;
2) ປົກປັກຮັກສາ, ຊຸກຍູ້ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ມູນເຊື້ອຄວາມຮັກແພງສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາຂອງປະຊາຊົນລາວບັນດາເຜົ່າ, ພ້ອມດຽວກັນນັ້ນກໍເປັນການປະກອບສ່ວນສ້າງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ.

## 4. ຈຸດປະສົງຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີຈຸດປະສົງ:

1) ສຶກສາອົບຮົມ ທາງດ້ານກົດໝາຍ ແລະ ລະບຽບການ ແນ່ໃສ່ເຮັດໃຫ້ຄູ່ກໍລະນີເຂົ້າໃຈ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງຮ່ວມກັນໂດຍສັນຕິວິທີ;
2) ໄກ່ເກ່ຍຂໍ້ຂັດແຍ່ງທີ່ມີລັກສະນະ ເລັກນ້ອຍ, ເບົາບາງ ແລະ ບໍ່ຫຍຸ້ງຍາກສັບສົນໃຫ້ສິ້ນສຸດລົງບົນພື້ນຖານ ກົດໝາຍ ແລະ ລະບຽບການ;
3) ສ້າງຄວາມສາມັກຄີປອງດອງລະຫວ່າງສະມາຊິກຄອບຄົວ, ຄູ່ກໍລະນີ ແລະ ປະຊາຊົນພາຍໃນບ້ານ.
4) ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ເຮັດໃຫ້ຄະດີບໍ່ໄປອັ່ງອໍ ຢູ່ສານ;

## 5. ທີ່ຕັ້ງ ແລະ ພາລະບົດບາດ ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນການຈັດຕັ້ງບໍ່ປະຈຳການຂອງບ້ານ ຊຶ່ງໄດ້ຮັບການເລືອກຕັ້ງຈາກປະຊາຊົນພາຍໃນບ້ານ ແລະ ໄດ້ຮັບການຮັບຮອງຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງນາຍບ້ານ ໂດຍຜ່ານຫ້ອງການຍຸຕິທຳຂັ້ນເມືອງ ມີພາລະບົດບາດໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນຢູ່ພາຍໃນບ້ານ ແລະ ຢູ່ພາຍໃຕ້ການຄຸ້ມຄອງ, ກວດກາ, ແນະນຳທາງດ້ານວິຊາການຂອງຫ້ອງການຍຸຕິທຳຂັ້ນເມືອງ. (ມາດຕາ 41; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ).

## 6. ສິດ ແລະ ໜ້າທີ່ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັດແຍ່ງຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງຂໍ ແລະ ຄົ້ນຄວ້າບັນຫາທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ;
2. ໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ ແລະ ຂໍ້ຂັດແຍ່ງອື່ນ ຕາມການສະເໜີຂອງຄູ່ກໍລະນີ ບົນພື້ນຖານກົດໝາຍ ແລະ ລະບຽບການ;

3. ໄກ່ເກ່ຍການກະທຳຜິດທາງອາຍາ ແລະ ການກະທຳຜິດຂອງເດັກ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີເດັກ;

4. ສຶກສາອົບຮົມ ແລະ ໃຫ້ການແນະນຳແກ່ຄູ່ກໍລະນີ;

5. ຕິດຕາມ, ຊຸກຍູ້ ໃຫ້ຄູ່ກໍລະນີ ຈັດຕັ້ງປະຕິບັດຜົນຂອງການໄກ່ເກ່ຍ ທີ່ໄດ້ຕົກລົງກັນ;

6. ໄດ້ຮັບການຝຶກອົບຮົມທາງດ້ານວິຊາການ ເພື່ອຍົກສູງຄວາມຮູ້, ຄວາມສາມາດຂອງຕົນ;

7. ເກັບຄ່າໃຊ້ຈ່າຍໃນການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ນຳໃຊ້ຄ່າໃຊ້ຈ່າຍດັ່ງກ່າວ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;

8. ປະສານສົມທົບ ແລະ ເຂົ້າຮ່ວມໃນການໂຄສະນາເຜີຍແຜ່ນິຕິກຳຕ່າງໆ;

9. ໃຫ້ການຊ່ວຍເຫຼືອ ແລະ ຮ່ວມມືໃນການຈັດຕັ້ງປະຕິບັດກົດໝາຍ ແລະ ວຽກງານຍຸຕິທຳ;

10. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ອົງການປົກຄອງບ້ານ ແລະ ຫ້ອງການຍຸຕິທຳຂັ້ນເມືອງຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 7. ໂຄງປະກອບບຸກຄະລາກອນ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ປະກອບດ້ວຍ ຜູ້ໄກ່ເກ່ຍ ຫ້າ ຄົນ ໂດຍມີຫົວໜ້າ ໜຶ່ງ ຄົນ, ຮອງຫົວໜ້າ ໜຶ່ງ ຄົນ ແລະ ສະມາຊິກ ສາມ ຄົນ.

ໃນກໍລະນີຈຳເປັນ ອາດມີຜູ້ຊ່ວຍວຽກໃນເວລາດຳເນີນການໄກ່ເກ່ຍກໍໄດ້.

## 8. ເຕັກນິກໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ເພື່ອຮັບປະກັນເຮັດໃຫ້ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສຳເລັດຜົນລົງດ້ວຍດີ ແລະ ເປັນທີ່ຍອມຮັບຂອງຄູ່ກໍລະນີ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງໄດ້ນຳໃຊ້ເຕັກນິກໃນການໄກ່ເກ່ຍ ດັ່ງນີ້:

- **ສ້າງຄວາມເຂົ້າໃຈຕໍ່ກັບຂໍ້ຂັດແຍ່ງ**

ກ່ອນອື່ນໝົດ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງກຳໃຫ້ໄດ້ວ່າຂໍ້ຂັດແຍ່ງນັ້ນແມ່ນຫຍັງ ຫຼື ກ່ຽວກັບຫຍັງ, ສາເຫດຂອງຂໍ້ຂັດແຍ່ງນັ້ນມາຈາກໃສ, ຄວາມຮຽກຮ້ອງຕ້ອງການຂອງຄູ່ກໍລະນີມີອັນໃດແດ່ ຈາກນັ້ນກໍຄົ້ນຄວ້າປຶກສາຫາລືພາຍໃນຄະນະ, ສົມທຽບຂໍ້ມູນທີ່ໄດ້ຮັບ ໂດຍອີງໃສ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ ເພື່ອຮັບປະກັນໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງສິ້ນສຸດລົງດ້ວຍດີ.

- **ສ້າງຄວາມເຂົ້າໃຈ ແລະ ຄວາມໄວ້ວາງໃຈໃຫ້ຄູ່ກໍລະນີ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງພະຍາຍາມສ້າງຄວາມເຂົ້າໃຈ ແລະ ຄວາມໄວ້ວາງໃຈໃຫ້ຄູ່ກໍລະນີດັ່ງນີ້:

1). ເລີ່ມຕົ້ນສ້າງບັນຍາກາດແບບເປັນກັນເອງ ດ້ວຍການທັກທາຍ, ສ້າງຄວາມຮູ້ຈັກກັນກັບຄູ່ກໍລະນີ, ແນະນຳຕົນເອງ, ຊວນເວົ້າໄປໃນເລື່ອງອື່ນກ່ອນ ເພື່ອໃຫ້ເກີດຄວາມຄຸ້ນເຄີຍກັນ ແນໃສ່ເຮັດໃຫ້ບັນຍາກາດຂອງການໄກ່ເກ່ຍຂໍ້ຂັດແຍ່ງເປັນໄປຕາມຮູບແບບຂອງການຄົ້ນຄວ້າປຶກສາຫາລື ເພື່ອຫາທາງຢຸດຕິຄວາມຂັດແຍ່ງ ແລະ ສ້າງໃຫ້ໄດ້ຄວາມຮັກແພງສາມັກຄີປອງດອງ, ຄວາມເຂົ້າອົກເຂົ້າໃຈກັນ;

2). ສະເໜີ ຫຼື ແນະນຳໃຫ້ຄູ່ກໍລະນີຮູ້ວ່າ ຕົນເອງເປັນຄົນກາງ ມີບົດບາດ ແລະ ໜ້າທີ່ ໃນການສຶກສາອົບຮົມ ແລະ ປະນີປະນອມຄູ່ກໍລະນີເທົ່ານັ້ນ. ແຕ່ຫາກບໍ່ແມ່ນເປັນຜູ້ຕັດສິນວ່າຝ່າຍໃດ ຖືກ ຫຼື ຝ່າຍໃດຜິດ;

3). ຍົກໃຫ້ເຫັນເຖິງຜົນສະທ້ອນທີ່ຈະຕາມມາ ຖ້າຫາກການແກ້ໄຂຂໍ້ຂັດແຍ່ງບໍ່ສຳເລັດ ດ້ວຍການຍົກເຫດຍົກຜົນ, ຂໍ້ເສຍທີ່ຈະເກີດຂຶ້ນ ເປັນຕົ້ນແມ່ນຄ່າໃຊ້ຈ່າຍ, ເສຍເວລາ, ຊີ້ແຈງຫຼັກການ, ຄວາມໝາຍຄວາມສຳຄັນ ແລະ ຜົນປະໂຫຍດຂອງການແກ້ໄຂຂໍ້ຂັດແຍ່ງໃຫ້ກັບຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ໄດ້ຮັບຮູ້ ແລະ ເຂົ້າໃຈ.

4). ມີຄວາມເຊື່ອໝັ້ນ ທີ່ຈະເຮັດໃຫ້ຄູ່ກໍລະນີເຄົາລົບ ແລະ ນັບຖື ແລະ ຫາວິທີ ຫຼຸດຜ່ອນບັນຫາ ຫຼື ຜ່ອນຄາຍບັນຫາດັ່ງກ່າວ. (ແຕ່ຫ້າມຮ້າຍ, ຫ້າມໂວຍວາຍ ຫຼືຕອບໂຕ້ດ້ວຍຄວາມຮຸນແຮງຕໍ່ເຂົາເຈົ້າ);

5). ຖືເອົາການສຶກສາອົບຮົມຄູ່ກໍລະນີ ດ້ວຍການຍົກເຫດຍົກຜົນ, ຍົກໃຫ້ເຫັນເຖິງຜົນໄດ້ຜົນເສັຍຂອງຄວາມຂັດແຍ່ງ ແລະ ບັນຫາອື່ນໆ.

❖ **ການປະພຶດຕົນໃນເວລາໄກ່ເກ່ຍຂໍ້ຂັດແຍ່ງ**

ໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງປະພຶດຕົນໃນທາງທີ່ດີ ເພື່ອສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມໄວ້ວາງໃຈໃຫ້ຄູ່ກໍລະນີ. ຊຶ່ງໃນນີ້ແມ່ນຕ້ອງເອົາໃຈໃສ່ດັ່ງນີ້:

➢ **ການວາງຕົວ**

1). ວາງໂຕເປັນກາງ, ບໍ່ລຳອຽງ, ບໍ່ເຂົ້າຂ້າງອອກຂາຄູ່ກໍລະນີ, ນຸ່ງຖືສຸພາບຮຽບຮ້ອຍ, ວາງຕົວແບບສະງ່າຜ່າເຜີຍ ແລະ ເປັນກັນເອງ;

2). ບໍ່ຄວນກະທຳສິ່ງໃດໜຶ່ງທີ່ສະແດງອອກທາງອະໄວຍະວະຕ່າງໆຂອງຮ່າງກາຍ ເຊັ່ນ: ໃຊ້ມືຊີ້ ຫຼື ແກວ່ງໄປມາ, ງຶກຫົວທີ່ບົ່ງບອກເຖິງການເຫັນດີກັບຄູ່ກໍລະນີຝ່າຍໃດໜຶ່ງ;

➢ **ການເວົ້າ**

ການເວົ້າເປັນສິ່ງທີ່ສຳຄັນ ແລະ ຈຳເປັນ ໃນການສື່ສານ ລະຫວ່າງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ຄູ່ກໍລະນີ. ສະນັ້ນ, ຕ້ອງເວົ້າໃນສິ່ງທີ່ເປັນປະໂຫຍດ, ມີຫຼັກການ ແລະ ເຊື່ອຖືໄດ້ ຫຼີກເວັ້ນການເວົ້າແບບບໍ່ມີສາລະ, ສັບສົນ ຫຼື ເຮັດໃຫ້ຄູ່ກໍລະນີເຂົ້າໃຈຍາກ.

➢ **ການຖາມ**

ໃນເວລາດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງ ການໃຊ້ຄຳຖາມຕໍ່ຄູ່ກໍລະນີ ກໍແມ່ນສິ່ງທີ່ສຳຄັນ ແລະ ຈຳເປັນ ເພື່ອສາມາດໃຫ້ຮູ້ໄດ້ເຖິງແນວຄິດຈິດໃຈ, ຄວາມຕ້ອງການຂອງເຂົາເຈົ້າ. ຫຼີກເວັ້ນການໃຊ້ຄຳຖາມທີ່ເຂົ້າໃຈຍາກ, ຄຳຖາມທີ່ເປັນການຊີ້ນຳ, ບັງຄັບ, ນາບຂູ່ ເພື່ອໃຫ້ໄດ້ຄຳຕອບ.

➢ **ການເບິ່ງ**

ໜ່ວຍໄກ່ເກ່ຂໍ້ຂັດແຍ່ງຂັ້ນບ້ານຕ້ອງເບິ່ງຄູ່ລະນີດ້ວຍຄວາມເປັນມິດທີ່ດີ, ສະແດງໃຫ້ເຫັນເຖິງຄວາມເປັນຫ່ວງເປັນໄຍ, ບໍ່ຄວນໃຊ້ສາຍຕາທີ່ສະແດງອອກໃນການນາບຂູ່ ຫຼື ບົ່ງບອກເຖິງການເຂົ້າຂ້າງອອກຂາຝ່າຍ ໃດຝ່າຍໜຶ່ງ.

➢ **ການຟັງ**

ໃນເວລາຄູ່ກໍລະນີມີຄຳເຫັນກ່ຽວກັບຂໍ້ຂັດແຍ່ງນັ້ນໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງ ຕ້ອງຕັ້ງໃຈຟັງ ເພື່ອກຳໃຫ້ໄດ້ເຖິງຄວາມຂັດຂ້ອງໝອງໃຈ, ຈຸດປະສົງ ຫຼື ຄວາມຕ້ອງການຂອງເຂົາເຈົ້າ, ບໍ່ຄວນຂັດຈັ່ງຫວະເມື່ອຄົນອື່ນກຳລັງເວົ້າຢູ່ ເພາະຈະເຮັດໃຫ້ບໍ່ສາມາດກຳບັນຫາໄດ້ ຫຼື ສະຫຼຸບສັງລວມຄືນໄດ້ຕໍ່ກັບຄຳເຫັນຂອງຄູ່ກໍລະນີທີ່ເວົ້າມາ.

**ສິ່ງທີ່ສຳຄັນ:** ການຮັບຟັງທີ່ດີ ແມ່ນກະແຈສຳຄັນຂອງນັກໄກ່ເກ່ຍ ຄື ເຄົາລົບຜູ້ເວົ້າ ຢ່າງຕັ້ງໃຈ ແລະ ອົດທົນຮັບຟັງ ຈຶ່ງຈະສາມາດເຂົ້າໃຈ, ຈັບປະເດັນ ແລະ ຄວາມຕ້ອງການຂອງຄູ່ກໍລະນີ ຊ່ວຍໃຫ້ເກີດມີສະພາບການປະນີປະນອມ ຫຼື ເຈລະຈາ ຫາຂໍ້ຕົກລົງຮ່ວມກັນ ແລະ ເປັນທີ່ຍອມຮັບຂອງຄູ່ກໍລະນີ.

➢ **ສະຫຼຸບສັງລວມ**

ພາຍຫຼັງທີ່ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງຕາມຂັ້ນຕອນຕ່າງໆແລ້ວ ໜ່ວຍໄກ່ເກ່ຍຂໍ້ຂັດແຍງຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຮີບຮ້ອນສະຫຼຸບສັງລວມຄຳເຫັນຂອງເຂົາເຈົ້າດ້ວຍການສັງລວມໂດຍຫຍໍ້, ເຂົ້າໃຈງ່າຍ ແລະ ຖືກຕ້ອງບົນພື້ນຖານຄຳເຫັນຂອງຄູ່ກໍລະນີ.

## 9. ຫຼັກການຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ຫຼັກການຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີ ດັ່ງນີ້:

1. ຄວາມສະເໝີພາບ ແລະ ສະໝັກໃຈຂອງຄູ່ກໍລະນີ;
2. ສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນ ດີງາມຂອງຊາດ;
3. ຄວາມເປັນເອກະລາດຂອງຜູ້ໄກ່ເກ່ຍ;
4. ການດຳເນີນການຊ້ອງໜ້າ;
5. ການສຶກສາອົບຮົມ ແລະ ປະນີປະນອມ;
6. ການເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີ;
7. ການຖອນຕົວ ແລະ ການຄ້ານຕົວຜູ້ໄກ່ເກ່ຍ;
8. ການຮັກສາຄວາມລັບຂອງຄູ່ກໍລະນີ. (ມາດຕາ 06,ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ)

## 10. ຂັ້ນຕອນຂອງການໄກ່ເກ່ຍ

1) ການຍື່ນຄຳຮ້ອງຂໍ;

2) ການຮັບຄຳຮ້ອງຂໍ;

3) ການຄົ້ນຄວ້າຄຳຮ້ອງຂໍ;

4) ການກະກຽມໃຫ້ແກ່ການໄກ່ເກ່ຍ;

5) ການດຳເນີນການໄກ່ເກ່ຍ (ມາດຕາ 28; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ)

ເພື່ອຮັບປະກັນການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ສາມາດດຳເນີນໄປໄດ້ດ້ວຍດີ ແລະ ມີຜົນສຳເລັດຢ່າງມີປະສິດທິພາບນັ້ນ ແມ່ນຕ້ອງໄດ້ດຳເນີນໄປຕາມຂັ້ນຕອນ ດັ່ງນີ້:

❖ **ການຍື່ນຄຳຮ້ອງຂໍ**

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ຊຶ່ງຄູ່ກໍລະນີບໍ່ສາມາດຕົກລົງແກ້ໄຂກັນໄດ້ດ້ວຍວິທີອື່ນແລ້ວ ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ທີ່ເຫັນວ່າສິດ ແລະ ຜົນປະໂຫຍດຂອງຕົນ ຖືກລະເມີດ ຫຼື ໂຕ້ແຍ່ງ ມີສິດຍື່ນຄຳຮ້ອງຂໍຕໍ່ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ບ່ອນທີ່ຕົນອາໄສຢູ່ ຫຼື ບ່ອນທີ່ຂໍ້ຂັດແຍ່ງເກີດຂຶ້ນ ເພື່ອໃຫ້ໄກ່ເກ່ຍ. (ມາດຕາ 29; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ )

ສຳລັບຄູ່ກໍລະນີ ທີ່ບໍ່ສາມາດຂຽນຄຳຮ້ອງຂໍ ກໍມີສິດເຂົ້າໄປຮ້ອງຂໍທາງປາກເປົ່າກໍໄດ້.




❖ **ການຮັບຄຳຮ້ອງ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຮັບເອົາຄຳຮ້ອງຂໍ ຂອງຄູ່ກໍລະນີ ດ້ວຍການຈົດເຂົ້າໃນປຶ້ມບັນທຶກຂາເຂົ້າ ພ້ອມທັງເຮັດເອກະສານຕິດຕາມໃຫ້ຜູ້ຮ້ອງຂໍ ເພື່ອຄວາມສະດວກໃນການຕິດຕາມ.

ສຳລັບການຮ້ອງຂໍທາງປາກເປົ່າ ໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຈົດບັນທຶກເນື້ອໃນການຮ້ອງຂໍ ນັ້ນ ແລ້ວອ່ານໃຫ້ຜູ້ຮ້ອງຂໍຟັງ ພ້ອມທັງລົງລາຍເຊັນ ແລະ/ຫຼື ແປະໂປ້ມືໃສ່ບົດບັນທຶກໄວ້ ເພື່ອເປັນຫຼັກຖານ.

ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍແລ້ວ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງແຈ້ງໃຫ້ຝ່າຍທີ່ຖືກຮ້ອງຂໍຊາບ ພາຍໃນກຳນົດ ສາມ ວັນ ເພື່ອໃຫ້ອະທິບາຍ, ຊີ້ແຈງ ຕໍ່ບັນຫາດັ່ງກ່າວ ແລະ ຝ່າຍທີ່ຖືກຮ້ອງຂໍນັ້ນຕ້ອງສົ່ງຄຳອະທິບາຍ, ຊີ້ແຈງຂອງຕົນໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ພາຍໃນກຳນົດ ສີ່ ວັນ ນັບແຕ່ວັນ ໄດ້ຮັບການແຈ້ງ ເປັນຕົ້ນໄປ.

ການຮັບເອົາຄຳອະທິບາຍ ຫຼື ການຊີ້ແຈງ ຂອງຜູ້ຖືກຮ້ອງຂໍ ກໍໃຫ້ປະຕິບັດຕາມວັກໜຶ່ງ ແລະ ສອງ ຂອງມາດຕານີ້ (ມາດຕາ 30; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ)




❖ **ການຄົ້ນຄວ້າຄຳຮ້ອງຂໍ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຄົ້ນຄວ້າຄຳຮ້ອງຂໍ ຂອງຄູ່ກໍລະນີ ພາຍໃນກຳນົດ ສາມ ວັນ ນັບ ແຕ່ ວັນໄດ້ຮັບຄຳຮ້ອງຂໍນັ້ນ ເປັນຕົ້ນໄປ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຂໍ້ຂັດແຍ່ງທີ່ຈະນຳມາ ດຳເນີນການໄກ່ເກ່ຍ.

ໃນກໍລະນີເຫັນວ່າ ມີຄວາມຈຳເປັນ ໃຫ້ນຳເອົາຂໍ້ຂັດແຍ່ງດັ່ງກ່າວ ໄປລາຍງານ ຂໍຄຳເຫັນ, ຂໍທິດຊີ້ນຳຈາກ ນາຍບ້ານ ຫຼື ຂໍຄຳເຫັນທາງດ້ານວິຊາການຈາກຫ້ອງການຍຸຕິທຳຂັ້ນເມືອງ ແລະ ພາກສ່ວນ ທີ່ກ່ຽວຂ້ອງ.

ເມື່ອໄດ້ຄົ້ນຄວ້າແລ້ວ ເຫັນວ່າມີຄວາມສາມາດທີ່ຈະດຳເນີນການໄກ່ເກ່ຍໄດ້ ກໍໃຫ້ກະກຽມການໄກ່ເກ່ຍ ແລະ ແຈ້ງໃຫ້ຄູ່ກໍລະນີຊາບ.(ມາດຕາ 31; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ)

❖ **ການກະກຽມໃຫ້ແກ່ການໄກ່ເກ່ຍ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງກະກຽມ ບຸກຄະລາກອນ, ເນື້ອໃນ, ວັນ, ເວລາ ແລະ ສະຖານທີ່ ພ້ອມທັງອອກໜັງສືເຊີນ ຄູ່ກໍລະນີ ແລະ ຜູ້ທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມການໄກ່ເກ່ຍ.(ມາດຕາ 32; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ)

❖ **ການດຳເນີນການໄກ່ເກ່ຍ**

ການດຳເນີນການໄກ່ເກ່ຍ ໃຫ້ປະຕິບັດຕາມບາດກ້າວ ດັ່ງນີ້:

**ບາດກ້າວທີ 01:** ການເປີດກອງປະຊຸມໄກ່ເກ່ຍ

➢ກ່າວຈຸດປະສົງຂອງກອງປະຊຸມ;

➢ແຈ້ງ ກ່ຽວກັບ:

- ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ, ຄູ່ກໍລະນີ ແລະ ຜູ້ທີ່ກ່ຽວຂ້ອງ;
- ຂໍ້ຂັດແຍ່ງທີ່ຈະນຳມາໄກ່ເກ່ຍ;
- ຄວາມໝາຍສຳຄັນ ແລະ ຜົນປະໂຫຍດຂອງການໄກ່ເກ່ຍ;
- ບົດບາດ ແລະ ໜ້າທີ່ຂອງຜູ້ໄກ່ເກ່ຍ;
- ສິດ ແລະ ພັນທະຂອງຄູ່ກໍລະນີ, ບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນ;
- ສິດໃນການຄ້ານຕົວຜູ້ໄກ່ເກ່ຍໃຫ້ຄູ່ກໍລະນີຊາບ.

ໃນກໍລະນີທີ່ມີການຄ້ານຕົວໂດຍມີເຫດຜົນ ຜູ້ໄກ່ເກ່ຍທີ່ຖືກຄ້ານຕົວນັ້ນ ຕ້ອງຖອນຕົວອອກຈາກ ການໄກ່ເກ່ຍຂໍ້ຂັດແຍ່ງທີ່ກ່ຽວຂ້ອງ. ຜູ້ໄກ່ເກ່ຍທີ່ຍັງເຫຼືອ ຕ້ອງສົມທົບກັບຜູ້ເຂົ້າຮ່ວມທີ່ຖືກເຊີນ ສືບຕໍ່ ດຳ ເນີນການໄກ່ເກ່ຍ ແລະ ຖາມຄຳເຫັນຂອງຄູ່ກໍລະນີກ່ຽວກັບຄວາມພ້ອມໃນການໄກ່ເກ່ຍ ແລ້ວແຈ້ງ ລະບຽບຂອງການໄກ່ ເກ່ຍໃຫ້ຜູ້ເຂົ້າຮ່ວມໄດ້ຮັບຊາບ ແລະ ປະຕິບັດຕາມ.

**ບາດກ້າວທີ 02:** ການມີຄຳເຫັນຂອງຄູ່ກໍລະນີ

ພາຍຫຼັງເປີດກອງປະຊຸມໄກ່ເກ່ຍແລ້ວ ຜູ້ໄກ່ເກ່ຍ ສະເໜີໃຫ້ຜູ້ຮ້ອງຂໍ ມີຄຳເຫັນກ່ອນ, ຫຼັງຈາກ ນັ້ນ ຈຶ່ງໃຫ້ຜູ້ຖືກຮ້ອງຂໍ ມີຄຳເຫັນແບບສັງລວມ, ກະທັດຮັດ, ເຂົ້າໃຈງ່າຍ ໂດຍເນັ້ນໃສ່ການເລົ່າຄືນ ເຫດການ, ສາເຫດທີ່ພາໃຫ້ເກີດຂໍ້ຂັດແຍ່ງ ແລະ ຄວາມຮຽກຮ້ອງຕ້ອງການຂອງເຂົາເຈົ້າ ພ້ອມທັງຕິດຕາມ ຮັບຟັງ ເພື່ອໃຫ້ສາມາດກຳໄດ້ບັນຫາຕ່າງໆ.

**ບາດກ້າວທີ 03:** ການສະເໜີຄຳເຫັນ ຂອງບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນ

ພາຍຫຼັງຄູ່ກໍລະນີມີຄຳເຫັນສິ້ນສຸດແລ້ວ ຜູ້ໄກ່ເກ່ຍ ສະເໜີ ໃຫ້ບຸກຄົນທີສາມ (ຖ້າມີ), ສະມາຊິກ ຄອບ ຄົວ ຫຼື ຍາດພີ່ນ້ອງ ມີຄຳເຫັນ ແລ້ວຈຶ່ງໃຫ້ຜູ້ເຂົ້າຮ່ວມອື່ນມີຄຳເຫັນ.

**ບາດກ້າວທີ 04:** ການສຶກສາອົບຮົມ ແລະ ການປະນີປະນອມ

ພາຍຫຼັງຄູ່ກໍລະນີ, ບຸກຄົນທີສາມ (ຖ້າມີ), ສະມາຊິກຄອບຄົວ ຫຼື ຍາດພີ່ນ້ອງ ມີຄຳເຫັນແລ້ວ ຜູ້ ໄກ່ເກ່ຍສະເໜີໃຫ້ຜູ້ເຂົ້າຮ່ວມຕາມການເຊີນ ມີຄຳເຫັນ. ຫຼັງຈາກນັ້ນ, ຜູ້ໄກ່ເກ່ຍ ຈຶ່ງສືບຕໍ່ ແລະ ຜັດປ່ຽນ ກັນສຶກສາອົບຮົມຄູ່ກໍລະນີ ດ້ວຍການອະທິບາຍ, ຊີ້ແຈງ, ຍົກເຫດ, ຍົກຜົນ, ຍົກໃຫ້ເຫັນຜົນໄດ້, ຜົນເສຍ ຂອງຂໍ້ຂັດແຍ່ງ, ຜົນປະໂຫຍດຂອງການໄກ່ເກ່ຍ ແລະ ອື່ນໆ ເພື່ອໃຫ້ເຂົາເຈົ້າສາມາດປະນີປະນອມ ແລະ ຕົກລົງກັນ ໂດຍສັນຕິວິທີ.

ພາຍຫຼັງໄດ້ສຶກສາອົບຮົມຄູ່ກໍລະນີແລ້ວ ຜູ້ໄກ່ເກ່ຍ ຕ້ອງຖາມຄຳເຫັນຂອງເຂົາເຈົ້າ ວ່າພໍສາມາດ ຕົກລົງ ຫຼື ລົງລອຍກັນໄດ້ບໍ່. ຖ້າເຂົາເຈົ້າ ຫາກຍັງບໍ່ສາມາດຕົກລົງ ຫຼື ລົງລອຍກັນໄດ້ ກໍໃຫ້ສືບຕໍ່ສຶກສາ ອົບຮົມ ຕື່ມຈົນສຸດຄວາມສາມາດ.

ໃນກໍລະນີ ມີສາເຫດໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງດຳລັດສະບັບນີ້ ອາດມີການ ໂຈະ ຫຼື ເລື່ອນການໄກ່ເກ່ຍ.

**ບາດກ້າວທີ 05:** ການສະຫຼຸບ ແລະ ປິດກອງປະຊຸມໄກ່ເກ່ຍ

ເມື່ອໄດ້ສຶກສາອົບຮົມຄູ່ກໍລະນີແລ້ວ ບໍ່ວ່າຜົນຂອງການໄກ່ເກ່ຍຈະອອກມາແນວໃດ ຜູ້ໄກ່ເກ່ຍຕ້ອງ ເຮັດບົດບັນທຶກ ແລ້ວອ່ານຊ້ອງໜ້າຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມ, ຖ້າເຫັນວ່າຖືກຕ້ອງແລ້ວ ໃຫ້ພ້ອມກັນລົງລາຍເຊັນ ແລະ/ຫຼື ແປະໂປ້ມືໄວ້ ເພື່ອເປັນຫຼັກຖານ.

ບົດບັນທຶກການໄກ່ເກ່ຍ ຕ້ອງເຮັດເປັນພາສາລາວ ເພື່ອເກັບຮັກສາໄວ້ໃນສຳນວນຂໍ້ຂັດແຍ່ງ ແລະ ສຳເນົາໃຫ້ຄູ່ກໍລະນີ ຜູ້ລະສະບັບ. ຈາກນັ້ນ, ຫົວໜ້າ ຫຼື ຜູ້ໄກ່ເກ່ຍ ມີຄຳເຫັນ ແລະ ກ່າວປິດກອງປະຊຸມ. (ມາດຕາ 33; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ)

## 11. ຜູ້ເຂົ້າຮ່ວມການໄກ່ເກ່ຍຂໍ້ຂັດແຍ່ງ

ຜູ້ເຂົ້າຮ່ວມການໄກ່ເກ່ຍ ມີດັ່ງນີ້:

1. ຄູ່ກໍລະນີ;
2. ບຸກຄົນທີສາມ;
3. ສະມາຊິກຄອບຄົວ ຫຼື ຍາດພີ່ນ້ອງຂອງຄູ່ກໍລະນີ;
4. ຜູ້ເຂົ້າຮ່ວມຕາມການເຊີນ. (ມາດຕາ 23; ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນ ບ້ານ)

## 12. ສິ່ງທີ່ຄວນເອົາໃຈໃສ່ໃນການໄກ່ເກ່ຍຂໍ້ຂັດແຍ່ງ

ຜູ້ໄກ່ເກ່ຍ ຕ້ອງມີຈັນຍາບັນ ດັ່ງນີ້:

1) ວາງຕົວເປັນກາງ, ບໍ່ເຂົ້າຂ້າງອອກຂາ, ບໍ່ລຳອຽງ, ໃຫ້ໂອກາດ ແກ່ຄູ່ກໍລະນີ, ບຸກຄົນທີສາມ, ສະມາຊິກຄອບຄົວ ຫຼື ຍາດພີ່ນ້ອງຂອງຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມຕາມການເຊີນ ໄດ້ສະເໜີ ຄຳຄິດຄຳເຫັນ ຢ່າງສະເໝີພາບ, ເທົ່າທຽມກັນ.

2) ປະຕິບັດໜ້າທີ່ຂອງຕົນ ດ້ວຍການຫຼີກເວັ້ນອະຄະຕິ 4 ປະການ ຄື:

- ສັນທາຄະຕິ ໝາຍເຖິງຄວາມຫຼົງໄຫຼໃນຄວາມຮັກ, ຄວາມຊັງ, ລຳອຽງໄປນຳສາຍພີ່ສາຍນ້ອງ ຫຼື ພັກພວກຂອງຕົນ;

- ໂທສາຄະຕິ ໝາຍເຖິງຄວາມໂມໂຫໂທໂສ, ຄວາມຄຽດແຄ້ນສ່ວນຕົວ, ຄວາມຮ້າຍໂກດ ເຊັ່ນ ການບັງຂັບ, ນາບຂູ່ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມໃນການໄກ່ເກ່ຍ;

- ໂມຫາຄະຕິ ໝາຍເຖິງຄວາມໂງ່ ຫຼົງເຊື່ອຄຳຮ້ອງຂໍ, ຄຳອະທິບາຍຊີ້ແຈງເທັດ ຫຼື ຄວາມບໍ່ຈິງ ແລ້ວປະຕິບັດບົດບາດໜ້າທີ່ຂອງຕົນໂດຍເຂົ້າຂ້າງອອກຂາ, ຂາດຄວາມທ່ຽງທຳ ແລະ ບໍ່ຍຸຕິທຳ;

- ພະຍາຄະຕິ ໝາຍເຖິງຄວາມຢ້ານກົວໃນອຳນາດບາລະມີຂອງຜູ້ອື່ນອັນຈະສົ່ງຜົນສະທ້ອນໃຫ້ຂາດຄວາມຍຸຕິທຳໄດ້.

3) ມີຄວາມປະພຶດທີ່ດີ, ວາງຕົວໃຫ້ເໝາະສົມກັບບົດບາດ, ໜ້າທີ່ຂອງຕົນ, ໃຫ້ກຽດ, ບໍ່ຈຳແນກ, ບໍ່ແບ່ງແຍກ, ບໍ່ກີດກັ້ນ ແລະ ບໍ່ຕັດສິນບັນຫາແທນຄູ່ກໍລະນີ;

4) ມີຄວາມໜຸ້ນທ່ຽງ, ອົດທົນ, ອົດກັ້ນ ຕໍ່ສະພາບການຕ່າງໆທີ່ເກີດຂຶ້ນໃນເວລາດຳເນີນການໄກ່ເກ່ຍ ເຊັ່ນ ການໂຕ້ຖຽງກັນ ຂອງຄູ່ກໍລະນີ, ຍາດຕິພີ່ນ້ອງ ແລະ ຜູ້ເຂົ້າຮ່ວມອື່ນ;

5) ຮັກສາຄວາມລັບຂອງຄູ່ກໍລະນີເປັນຕົ້ນແມ່ນ ບໍ່ເອົາຂໍ້ມູນ, ເອກະສານ, ຜົນຂອງການໄກ່ເກ່ຍ ຫຼື ບັນຫາຕ່າງໆ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງໄປເລົ່າ ຫຼື ເປີດເຜີຍໃຫ້ຄອບຄົວ, ຍາດຕິພີ່ນ້ອງ, ບຸກຄົນອື່ນ ຫຼື ສັງຄົມຮັບຮູ້.

❖ ແນະນຳ

ເພື່ອໃຫ້ປະຊາຊົນຢູ່ພາຍໃນບ້ານ ສາມາດຮັບຮູ້ວ່າ ຢູ່ພາຍໃນບ້ານຂອງຕົນ ມີໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫລືອາສາສະໝັກດ້ານກົດໝາຍປະຈຳບ້ານ ເປັນທີ່ເພິ່ງໃນການໃຫ້ຂໍ້ມູນແນະນຳກ່ຽວກັບບັນຫາຕ່າງໆ ສະນັ້ນ, ຢູ່ແຕ່ລະຫ້ອງການບ້ານຕ້ອງຕິດໂປດສະເຕີ ໂຄງຮ່າງການຈັດຕັ້ງຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫລື ອາສາສະໝັກດ້ານກົດໝາຍປະຈຳບ້ານ ພ້ອມຮູບ, ຊື່ ແລະ ທີ່ ສຳຄັນແມ່ນເບີໂທຕິດຕໍ່ ໄວ້ໃນກະດານຂ່າວຫ້ອງການບ້ານ ຖ້າຫາກບໍ່ມີເປັນໂປດເຕີ ໃຫ້ສັງລວມໃສ່ເຈ້ຍ A4 ດ້ວຍການຕີພິມ ຫຼື ຂຽນດ້ວຍມືຕິດໄວ້ກະດານຂ່າວຂອງຫ້ອງການບ້ານ ເພື່ອໃຫ້ປະຊົນພາຍໃນບ້ານມີຄວາມສະດວກໃນເວລາຕ້ອງການຂໍຄວາມຊ່ວຍເຫລືອ;

## 13. ກໍລະນີສຶກສາ ແລະ ແຜນວາດປະກອບໃນການເຂົ້າເຖິງກົນໄກການແກ້ໄຂຄຳຮ້ອງທຸກ

ໃນກໍລະນີທີ່ໄດ້ຮັບການຮ້ອງຂໍ ຫຼື ສະເໜີໃຫ້ໄກ່ເກ່ຍຂໍ້ຂັດແຍ່ງ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສາມາດນຳເອົາກົດໝາຍ ແລະ ມາດຕາທີ່ກ່ຽວຂ້ອງ ຊຶ່ງເນື້ອໃນລະອຽດ ສາມາດອ່ານເພີ່ມຕື່ມຢູ່ ເອກະສານຊ້ອນທ້າຍທີ 2 ຂອງຄູ່ມືສະບັບນີ້ ເພື່ອເປັນບ່ອນອີງໃນການໃຫ້ຂໍ້ມູນທາງດ້ານກົດໝາຍແກ່ປະຊາຊົນ.

**ກໍລະນີສຶກສາ**

ເປົ້າໝາຍ ຕົ້ນຕໍຂອງຄູ່ມືສະບັບນີ້ ແມ່ນແນໃສ່ ບັນຫາທີ່ກ່ຽວພັນກັບທີ່ດິນ ເພື່ອສະໜັບສະໜູນໃຫ້ບຸກຄົນ ຫຼື ຫຼາຍຄົນ ພາຍໃນຊຸມຊົນ ສາມາດເຂົ້າເຖິງ ການແກ້ໄຂຂໍ້ຂັດແຍ່ງ ຫຼື ການຮ້ອງທຸກທີ່ເປັນທາງການ ໂດຍຜ່ານ ການແນະນຳ ຈາກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ອາສາສະໝັກດ້ານກົດໝາຍປະຈຳບ້ານ ແລະ ເຮັດໃຫ້ສາມາດໄດ້ຮັບຄຳປຶກສາທາງດ້ານກົດໝາຍ (ການຊ່ວຍເຫຼືອທາງດ້ານກົດໝາຍ) ເມື່ອເກີດມີບັນຫາ ຫຼື ຂໍ້ຂັດແຍ່ງກ່ຽວກັບທີ່ດິນ ພາຍໃນຊຸມຊົນ ສະນັ້ນ ຈຶ່ງມີກໍລະນີຕົວຢ່າງຈຳນວນໜຶ່ງ ທີ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານສາມາດນຳມາພິຈາລະນາເພື່ອທຳການໄກ່ເກ່ຍ ຫຼື ໃຫ້ການແນະນຳເຂົ້າສູ່ການແກ້ໄຂທາງບໍລິຫານ, ຕຸລາການ ແລະ ນິຕິບັນຍັດ (ມີ 5 ແຜນວາດປະກອບການອະທິບາຍແຕ່ລະກໍລະນີ) ດັ່ງນີ້:

**ກໍລະນີທີ 1:** ທ້າວ ກ ເປັນລູກຫຼ້າ ມີເອື້ອຍອ້າຍ 3 ຄົນ (ເອື້ອຍ 2) ກ່ອນພໍ່ແມ່ເສຍຊີວິດ ໄດ້ມອບທີ່ດິນ ພ້ອມເຮືອນ ໃຫ້ທ້າວ ກ ຜູ້ດຽວ ຊຶ່ງເອື້ອຍອ້າຍກໍຕົກລົງເຫັນດີ (ທາງປາກເປົ່າ) ແຕ່ມີ ນາງ ຂ ຜູ້ເປັນເອື້ອຍກົກ ໄດ້ຂໍອາໄສຢູ່ ຍ້ອນໃກ້ສະຖານທີ່ເຮັດວຽກ, ສ່ວນທ້າວ ກ ແມ່ນ ມີທຸລະກິດຢູ່ຕ່າງປະເທດດົນໆຈຶ່ງກັບມາບ້ານ ພາຍຫລັງທີ່ພໍ່ໄດ້ເສຍຊີວິດ ນາງ ຂ ໄດ້ໄປລັກຂຶ້ນໃບຕາດິນເປັນຂອງຕົນ ຕໍ່ມາຜູ້ກ່ຽວ ໄດ້ໂອນສິດນຳໃຊ້ທີ່ດິນ ແລະ ເຮືອນ ໃຫ້ລູກສາວຂອງຜູ້ກ່ຽວ ໂດຍທີ່ທ້າວ ກ ແລະ ນ້ອງຜູ້ອື່ນໆ ບໍ່ຮັບຮູ້ນຳ, ຕົກມາຮອດມື້ໜຶ່ງທ້າວ ກ ໄດ້ກັບມາບ້ານ ຈຶ່ງໄດ້ຮັບຮູ້ວ່າມູນມໍຣະດົກທີ່ພໍ່ມອບໃຫ້ຕົນ ຕົກເປັນຂອງຫຼານສາວ, ທ້າວ ກ ຈຶ່ງໄປປຶກສາກັບນາຍບ້ານ ແລະ ຫາວິທີການແກ້ໄຂ.

**ກໍລະນີທີ 2:** ນາງ ກ ໄດ້ສ້າງຄອບຄົວ ແລະ ໄດ້ຊື້ດິນ 1 ຕອນ ທີ່ຕິດກັບດິນຂອງທ້າວ ຂ ຜູ້ເປັນອ້າຍຄີງ ແລະ ໄດ້ບອກວ່າຈະເບິ່ງແຍງຮັກສາໄວ້ໃຫ້ ຫຼັງຈາກນັ້ນ ນາງ ກ ກໍຍ້າຍໄປຢູ່ກັບຜົວທີ່ຕ່າງແຂວງ ຍ້ອນວ່າມັນໃກ້ບ່ອນເຮັດວຽກ ແລະ ຜົວຂອງລາວເອງກໍດຳເນີນທຸລະກິດຢູ່ຫັ້ນ ແຕ່ລະປີ ນາງ ກ ໄດ້ມາເສຍພາສີທີ່ດິນເປັນປົກກະຕິ ຕາມກົດໝາຍເປັນເວລາສິບກວ່າປີ. ຕົກມາຮອດໄລຍະໜຶ່ງ ຜູ້ກ່ຽວ ຈຶ່ງຮູ້ວ່າ ທ້າວ ຂ ໄດ້ນຳໃຊ້ດິນຂອງຕົນ ປູກສ້າງເປັນຫ້ອງແຖວ ໃຫ້ຄົນເຊົ່າ ເມື່ອນາງ ກ ໄປທວງຄືນກໍບໍ່ຍອມມອບດິນໃຫ້ ແລະ ໄດ້ອ້າງວ່າດິນດັ່ງກ່າວ ເປັນຂອງຕົນແລ້ວ ນາງ ກ ຈຶ່ງໄປປຶກສາກັບນາຍບ້ານ ແລະ ຫາວິທີການແກ້ໄຂ.

**ກໍລະນີທີ 3:** ປະຊາຊົນບ້ານແຫ່ງໜຶ່ງ ຢູ່ຫ່າງໄກຊອກຫຼີກ ມີເສັ້ນທາງໄປມາຍາກ ສ່ວນຫຼາຍອາຊີບແມ່ນປູກຝັງ, ລ້ຽງສັດ ຫາເຄື່ອງປ່າຂອງດົງ ການສ້າງຕັ້ງບ້ານມີຄວາມເປັນມາຫຼາຍຮ້ອຍປີ ມີປະຊາຊົນອາໄສຢູ່ປະມານ 100 ກວ່າ ຫຼັງຄາເຮືອນ ປະມານ 400 ກວ່າຄົນ ແລະ ຍັງບໍ່ທັນມີໃບຕາດິນຖາວອນເທື່ອ ມີແຕ່ໃບແຈ້ງນຳໃຊ້ທີ່ດິນເປັນປະເພດທີ່ດິນປຸກສ້າງ ແລະ ໄດ້ຝັງເຫຼັກເຂດແດນເທົ່ານັ້ນ. ສ່ວນວ່າດິນທຳການຜະລິດ ຫຼື ດິນປະເພດອື່ນໆ ປະຊາຊົນແມ່ນຍັງນຳໃຊ້ຕາມປະເພນີ, ຢູ່ມາມື້ໜຶ່ງໄດ້ມີປະຊາຊົນ 18 ຄອບຄົວ ໄປແຈ້ງຕໍ່ອຳນາດການປົກຄອງ ບ້ານ ວ່າ ທີ່ດິນທຳການຜະລິດຂອງພວກຕົນ ກຳລັງຖືກທ້າວ ກ ເຈົ້າຂອງບໍລິສັດໜຶ່ງ ອ້າງວ່າຕົນໄດ້ມີເອກະສານສິດ ໃຫ້ທຳການບຸກເບີກ ແລະ ອ້ອມຮົ້ວ ທີ່ດິນດັ່ງກ່າວ.

**ກໍລະນີທີ 4:** ນາງ ກ (ເຈົ້າໜີ້) ໄດ້ສ້າງເອກະສານປະກອບກູ້ເງິນ ໃຫ້ນາງ ຂ (ລູກໜີ້) ເຊັນ ໃນນັ້ນມີເອກະສານຕ່າງໆທີ່ພ້ອມໂອນສິດນຳໃຊ້ທີ່ດິນ ໂດຍບໍ່ໄດ້ລະບຸວັນທີ(ໂອນລອຍ) ພ້ອມເອົາໃບຕາດິນສະບັບຂອງແທ້ໄວ້ນຳ ນາງ ກ ເພື່ອຄ້ຳປະກັນ, ຍ້ອນຜູ້ກ່ຽວມີຄວາມຈຳເປັນຕ້ອງໃຊ້ເງິນ ແລະ ບໍ່ຮູ້ກົດໝາຍ ນາງ ຂ ຈຶ່ງຈຳຍອມເຊັນເອກະ ສານທຸກຢ່າງ ເມື່ອກາຍກຳນົດໃຊ້ເງິນຕົ້ນ(200ລ້ານກີບ) ແລະ ດອກເບ້ຍ(5%ຕໍ່ເດືອນ) ຕາມກຳນົດກາຍ 3 ເດືອນ ຊຶ່ງ ນາງ ຂ ສາມາດຈ່າຍໃຫ້ໄດ້ແຕ່ດອກເບ້ຍເດືອນດຽວເທົ່ານັ້ນ ຕໍ່ມານາງ ກ ຈຶ່ງດຳເນີນການໂອນສິດນຳໃຊ້ທີ່ ດິນເປັນຂອງຕົນ ເມື່ອນາງ ຂ ຮູ້ຈຶ່ງໄປທວງຖາມເອົາກັບນາງ ກ ກໍບໍ່ເປັນຜົນ, ສະນັ້ນ ຈຶ່ງໄປປຶກສາກັບນາຍບ້ານ ແລະ ເຮັດຄຳຮ້ອງ ຫາໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

**ກໍລະນີທີ 5:** ທ້າວ ກ ໄດ້ລ້ອມຮົ້ວ ກໍ່ກຳແພງ ໃນດິນ ແລະ ເຮືອນ ຂອງຕົນ ທີ່ມີຊາຍແດນຕິດກັບດິນ ຂອງທ້າວ ຂ ແຕ່ໃນການລ້ອມຮົ້ວນັ້ນ ດິນຂອງທ້າວ ກ ມີຮູບຮ່າງເປັນຮູບໂຄ້ງ ທ້າວ ກ ຢ້ານວ່າ ກຳແພງຈະບໍ່ງາມ ແລະ ການກໍ່ກຳແພງ ເປັນຮູບໂຄ້ງຈະມີຄວາມຍຸ່ງຍາກ ທ້າວ ກ ກໍ່ເລີຍລ້ອມລັດຊື່ ຈຶ່ງໄປກວມເອົາດິນຂອງ ທ້າວ ຂ ກວ້າງ 10 ຊັງຕີແມັດ ແມັດ ຍາວ 5 ແມັດ ໂດຍບໍ່ໄດ້ປຶກສາ ແລະ ຮັບອະນຸຍາດຈາກທ້າວ ຂ ເມື່ອທ້າວ ຂ ໄດ້ມາເຫັນກໍ່ຄັດຄ້ານ ແລະ ບອກໃຫ້ທ້າວ ກ ຫຍັບກຳແພງເຂົ້າໄປໃຫ້ຖືກຕາມຫຼັກແດນ ແຕ່ທ້າວ ກ ບໍ່ຍັບເຂົ້າ ອ້າງວ່າໄດ້ກໍ່ກຳແພງສຳເລັດແລ້ວ ມັນມ້າງຍາກ ແລະ ເສຍງົບປະມານ.

**ແຜນວາດການໃຫ້ຄຳແນະນຳຄູ່ກໍລະນີເຂົ້າສູ່ການແກ້ໄຂທາງບໍລິຫານ, ຕຸລາການ ແລະ ນິຕິບັນຍັດ (ການຮ້ອງທຸກ)**

ໃນກໍລະນີທີ່ ຄູ່ກໍລະນີສາມາດຕົກລົງກັນໄດ້ ແຕ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ຫຼື ຈັດຕັ້ງປະຕິບັດ ໄດ້ສ່ວນໃດສ່ວນໜຶ່ງ ແລະ ໃນກໍລະນີທີ່ ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້ ໃຫ້ໜ່ວຍໄກ່ເກ່ຍ ຂໍ້ຂັດແຍ່ງຂັ້ນບ້ານ ແນະນຳໃຫ້ຄູ່ກໍລະນີຕາມແຜນວາດ ລຸ່ມນີ້:

แผนอาดที 1: ผิมขอງภามไภ่เภ่ย และ ภามใช้คำแมะมำคู่ภำละมิ

**ຜົນຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**

**ຄູ່ກໍລະນີສາມາດຕົກລົງກັນໄດ້**

ໃນກໍລະນີທີ່ ຄູ່ກໍລະນີສາມາດຕົກລົງກັນໄດ້ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງສືບຕໍ່ຊຸກຍູ້ຄູ່ກໍລະນີປະຕິບັດສິດ ແລະ ພັນທະຕໍ່ກັນ ຕາມທີ່ ໄດ້ຕົກລົງກັນໄວ້ໃນປຶ້ມບັນທຶກການໄກ່ເກ່ຍ ເກ່ຍ;

ຖ້າຫາກຄູ່ກໍລະນີສາມາດ ປະຕິບັດສິດ ແລະ ພັນທະຕໍ່ກັນ ຕາມທີ່ໄດ້ຕົກລົງກັນໄວ້ໃນປຶ້ມບັນທຶກ ຖືວ່າສິ້ນສຸດສິດ ແລະ ພັນທະຕໍ່ກັນ.

**1. ຄູ່ກໍລະນີຕົກລົງກັນໄດ້ ແຕ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ຫຼື ຈັດຕັ້ງປະຕິບັດ ໄດ້ສ່ວນໃດສ່ວນໜຶ່ງຕາມປຶ້ມບັນທຶກການໄກ່ເກ່ຍ ແລະ 2. ບໍ່ສາມາດຕົກລົງກັນໄດ້**

**ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ** ມີຄຳເຫັນເປັນລາຍລັກອັກສອນ ໃສ່ປຶ້ມບັນທຶກການໄກ່ເກ່ຍນັ້ນ ພ້ອມທັງແນະນຳໃຫ້ຄູ່ກໍລະນີນຳໃຊ້ສິດ ເພື່ອສືບຕໍ່ດຳເນີນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ພ້ອມແນະນຳຊ່ອງທາງການແກ້ໄຂ 2 ຊ່ອງທາງຄື:

**1. ອົງການບໍລິຫານ (ຂະແໜງການຍຸຕິທຳ ຫຼື ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ)**
ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສາມາດ ແນະນຳໃຫ້ຄູ່ກໍລະນີ ເຮັດຄຳຮ້ອງຫາຫ້ອງການຍຸຕິທຳຂັ້ນເມືອງ ຫລື ຄຳສະເໜີຫາຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ເພື່ອຂໍການ ພິຈາລະນາແກ້ໄຂໃຫ້ໃນຂັ້ນຕໍ່ໄປ.

**2. ອົງການຕຸລາການ (ສານປະຊາຊົນ)** ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສາມາດແນະນຳໃຫ້ຄູ່ກໍລະນີ ປະກອບຄຳຮ້ອງຟ້ອງ ຫາສານປະຊາຊົນເຂດ (ໃນກໍລະນີມູນຄ່າ ຄວາມເສຍຫາຍຕ່ຳ ກ່ວາສາມຮ້ອຍລ້ານກີບ) ຖ້າຫາກມູນຄ່າຄວາມເສຍຫາຍເກີນ ແມ່ນໃຫ້ຍື່ນຫາສານປະຊາຊົນແຂວງ/ນະຄອນຫຼວງ ພິຈາລະນາ ຕັດສິນເປັນຂັ້ນຕົ້ນ.

**ໝາຍເຫດ:** ໃນກໍລະນີທີ່ ຄູ່ກໍລະນີ ຕ້ອງການເຂົ້າສູ່ການແກ້ໄຂທາງບໍລິຫານ ຫລື/ແລະ ຂະບວນການຍຸຕິທຳ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຕ້ອງມີຄຳເຫັນຢັ້ງຢືນຕໍ່ຜົນຂອງການໄກ່ເກ່ຍໃຫ້ຄູ່ກໍລະນີເພື່ອໃຊ້ເປັນເອກະສານຄັດຕິດ ຄຳສະເໜີ ຫຼື ຄຳຮ້ອງຟ້ອງ.

ແຜນວາດທີ 2: ການໃຫ້ຄຳແນະນຳຄູ່ກໍລະນີເຂົ້າສູ່ການແກ້ໄຂທາງບໍລິຫານ



- **ແນວລາວສ້າງຊາດ:** ຕິດຕາມ ກວດກາ ການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ, ອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພະນັກງານ-ລັດຖະກອນ ຕາມຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ເພື່ອສະເໜີ ຕໍ່ອົງການຈັດຕັ້ງທີ່ ກ່ຽວຂ້ອງ ພິຈາລະນາແກ້ໄຂ;

  ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ພາຄີ, ປະຊາຊົນລາວບັນດາເຜົ່າ ແລະ ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດຂອງຕົນ; ກົດໝາຍວ່າດ້ວຍ ແນວລາວສ້າງຊາດ ສະບັບເລກທີ49/ສພຊ, ລົງວັນທີ 20 ມິຖຸນາ 2018 ມາດຕາ 9 (ປັບປຸງ) ຂໍ້ 5 ແລະ ຂໍ້ 7.
- **ອົງການກວດກາລັດ:** ຕິດຕາມ, ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ພາລະບົດ ບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຂັ້ນກະຊວງ, ຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນຂອງລັດທີ່ ກ່ຽວຂ້ອງ,

  ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ; ກົດໝາຍ ວ່າດ້ວຍອົງການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017 ມາດຕາ 31 (ປັບປຸງ) ຂໍ້ 7 ແລະ ຂໍ້ 11.

- **ການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍປະກອບດ້ວຍ:** 1. ກົມສົ່ງເສີມລະບົບຍຸຕິທຳຂອງກະຊວງຍຸຕິທຳ, ຂະແໜງສົ່ງເສີມວຽກງານຍຸຕິທຳຮາກຖານ ຂອງພະແນກ ຍຸຕິທຳແຂວງ, ນະຄອນຫຼວງ; 2. ໜ່ວຍງານສົ່ງເສີມວຽກງານຍຸຕິທຳຮາກຖານ ຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ; 3. ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ຂອງສະພາທະນາຍຄວາມ; 4. ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ຂອງສູນກາງສະຫະພັນແມ່ຍິງລາວ; ຂະແໜງສົ່ງເສີມຄວາມກ້າວໜ້າ, ໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ແມ່-ເດັກ ຂອງສະຫະພັນແມ່ຍິງແຂວງ; ໜ່ວຍງານສົ່ງເສີມຄວາມກ້າວໜ້າ, ບົດບາດຍິງ-ຊາຍ ແລະ ປົກປ້ອງແມ່ຍິງ-ເດັກ ຂອງສະຫະພັນແມ່ຍິງເມືອງ ແລະ ຂອງອົງການຈັດຕັ້ງອື່ນ. **ການຊ່ວຍເຫຼືອທາງດ້ານກົດໝາຍ ມີສີ່ ປະເພດ ດັ່ງນີ້:** 1. ການສະໜອງຂໍ້ມູນຂ່າວສານ; 2. ການໃຫ້ຄຳປຶກສາທາງດ້ານກົດໝາຍ; 3. ການຊ່ວຍເຫຼືອໃນການຮ່າງເອກະສານ; 4. ການເປັນຜູ້ຕາງໜ້າໃນການດຳເນີນຄະດີ. **ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີດັ່ງນີ້:** 1. ຜູ້ທຸກຍາກ; 2. ຜູ້ດ້ອຍໂອກາດ; 3. ເດັກທີ່ຕ້ອງການ ການປົກປ້ອງພິເສດ; 4. ຜູ້ກະທຳຜິດ ທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ; 5. ຄົນພິການ; 6. ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ; 7. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. (ດາລັດ ການຊ່ວຍເຫຼືອທາງດ້ານກົດໝາຍ ມຕ 7, 12 ແລະ ມາດຕາ 15).

- **ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ລັດຖະບານ:** ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້: ລັດຖະບານ ມອບໃຫ້ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສົມທົບກັບກະຊວງ, ອົງການ ລັດທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ກວດກາຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ ລັດຖະບານ ພິຈາລະນາຕົກລົງ ພາຍໃນເວລາ ສີ່ສິບຫ້າວັນລັດຖະການ, ໃນກໍລະນີຄຳສະເໜີທີ່ມີຄວາມຫຍຸ້ງຍາກ ຊຶ່ງພົວພັນກັບຫຼາຍພາກສ່ວນ ກຳນົດເວລາຂອງການຕົກລົງນັ້ນ ບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນໄດ້ ຮັບຄຳສະເໜີ ເປັນຕົ້ນໄປ; ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022 ມາດຕາ 21 (ປັບປຸງ) ວັກສອງ ຂໍ້ 01.
- **ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນແຂວງ:** ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້: ອົງການປົກຄອງຂັ້ນແຂວງ ກວດກາ ຂໍ້ມູນຫຼັກຖານຕົວຈິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລ້ວພິຈາລະນາ ແລະ ແກ້ໄຂພາຍໃນເວລາ ສາມສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ; ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022 ມາດຕາ 20 (ປັບປຸງ) ວັກສອງ ຂໍ້ 01.
- **ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນເມືອງ:** ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້: ອົງການປົກຄອງຂັ້ນເມືອງ ກວດກາ ຂໍ້ມູນຫຼັກຖານຕົວຈິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລ້ວພິຈາລະນາ ແລະ ແກ້ໄຂພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ; ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022 ມາດຕາ 19 (ປັບປຸງ) ວັກສອງ ຂໍ້ 01.
- **ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນບ້ານ:** ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້: ອົງການປົກຄອງບ້ານ ພິຈາລະນາ ແລະ ແກ້ໄຂຄຳສະເໜີ ພາຍໃນເວລາຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ; ກົດໝາຍ ວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022 ມາດຕາ 18 (ປັບປຸງ) ວັກສອງ ຂໍ້ 01.
- **ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ:** ມາດຕາ 41, ລັດຖະທຳມະນູນ ເລກທີ 63/ສພຊ, ລົງວັນທີ 12 ສິງຫາ 2015 ແລະ ມາດຕາ. 7 (ປັບປຸງ) ການແກ້ໄຂຄຳຮ້ອງທຸກ ເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022 ແລະ ມາດຕາ. 163 ກົດໝາຍ ວ່າດ້ວຍດຳເນີນຄະດີແພ່ງ ເລກທີ 13/ສພຊ, ລົງວັນທີ 04 ກໍລະກົດ 2012.

**ແຜນວາດທີ 3: ການໃຫ້ຄຳແນະນຳຄູ່ກໍລະນີເຂົ້າສູ່ການແກ້ໄຂທາງຕຸລາການ (ສານປະຊາຊົນ, ຄະດີແພ່ງ)**



ແຜນວາດທີ 4: ການໃຫ້ຄຳແນະນຳຄູ່ກໍລະນີເຂົ້າສູ່ການແກ້ໄຂທາງຕຸລາການ(ສານປະຊາຊົນ, ຄະດີປົກຄອງ)



**ສິດອຳນາດຂອງຄະນະສານປົກຄອງ (ສາເຫດທີ່ພາໃຫ້ມີການຮ້ອງຟ້ອງທາງປົກຄອງ):**

1. ການອອກ, ການໂຈະ ຫຼື ການຍົກເລີກ ຂໍ້ ຕົກລົງ, ຄຳສັ່ງ ຫຼື ໃບອະນຸຍາດ ກ່ຽວກັບການ ຜະລິດ, ທຸລະກິດ, ກິດຈະການອື່ນ ແລະ ການ ຄຸ້ມຄອງທີ່ດິນບໍ່ຖືກຕ້ອງ;
2. ການລົງວິໄນ ຫຼື ໃຫ້ອອກຈາກລັດຖະການ ທີ່ບໍ່ຖືກຕ້ອງ;
3. ການຍົກຍ້າຍ ຫຼື ການສັບປ່ຽນໜ້າທີ່ ແລະ ບ່ອນປະຈຳການ ທີ່ບໍ່ຖືກຕ້ອງ;
4. ຄວາມຜິດພາດ ໃນການຂຶ້ນບັນຊີຜູ້ມີສິດປ່ອນບັດເລືອກຕັ້ງ ຊຶ່ງຄະນະກຳມະການເລືອກຕັ້ງບໍ່ສາມາດແກ້ໄຂໄດ້;
5. ການເມີນເສີຍ ຫຼື ຊັກຊ້າ, ແກ່ຍາວ ໂດຍບໍ່ມີ ເຫດຜົນ ໃນການປະຕິບັດໜ້າທີ່ຂອງພະນັກ ງານ - ລັດຖະ ກອນ ຊຶ່ງສ້າງຄວາມເສຍຫາຍໃຫ້ ແກ່ລັດ ແລະ ພົນລະເມືອງ;
6. ການກະທຳ ຂອງພະນັກງານ-ລັດຖະກອນ ກ່ຽວກັບການປັບໃໝ, ການເກັບພາສີ, ການເກັບອາກອນ, ຄ່າທຳນຽມ, ຄ່າບໍລິການ, ພັນທະອື່ນ, ຮັບຊັບສິ່ງຂອງ ແລະ ການນຳໃຊ້ຊັບສິ່ງຂອງ ຂອງຜູ້ອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ຂໍ້ຕົກລົງ ກ່ຽວກັບການແລກປ່ຽນ ຫຼື ການຊົດ ເຊີຍ ທີ່ບໍ່ຖືກຕ້ອງ.
8. ການກະທຳທີ່ບໍ່ຖືກຕ້ອງ ກ່ຽວກັບຄວາມຮັບຜິດຊອບ ລະຫວ່າງອົງການຈັດຕັ້ງລັດດ້ວຍກັນ;
9. ຄະດີອື່ນ ກ່ຽວກັບບັນຫາ ທາງປົກຄອງ ຫຼື ທາງບໍລິຫານ ຕາມການຕົກລົງຂອງສະພາຜູ້ພິພາກສາຂອງ ສານປະຊາຊົນສູງສຸດ.

ສຳລັບບັນຫາກ່ຽວກັບ ຄວາມລັບຂອງຊາດ, ຄວາມໝັ້ນຄົງ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ແລະ ການພົວພັນຕ່າງປະເທດ ບໍ່ໃຫ້ນຳມາພິຈາລະນາ.

(ລັດຖະບັນຍັດຂອງປະທານປະເທດວ່າດ້ວຍການດຳເນີນຄະດີປົກຄອງ ສະບັບເລກທີ 001 ປປທ, ລົງວັນທີ 19 ມີນາ 2021 ມຕ 16 ວັກ 1 ຂໍ້ 1, 5 ແລະ ຂໍ້ 7)

ແຜນວາດທີ 5: ການໃຫ້ຄຳແນະນຳຄູ່ກໍລະນີເຂົ້າສູ່ການແກ້ໄຂທາງນິຕິບັນຍັດ



ຄຳຮ້ອງຂໍຄວາມເປັນທຳ ໃຫ້ຍື່ນ ຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາ ແຫ່ງຊາດ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນຮັບຊາບ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຫຼື ຄຳຮ້ອງຟ້ອງ ຂອງອົງການທີ່ກ່ຽວຂ້ອງເປັນຕົ້ນໄປ.

ຄຳຮ້ອງຂໍຄວາມເປັນທຳ ຕ້ອງໄດ້ຮັບການພິຈາລະນາ ພາຍໃນເວລາ ສີ່ສິບຫ້າວັນ ລັດຖະການ, ໃນກໍລະນີຄຳຮ້ອງຂໍຄວາມເປັນທຳ ທີ່ມີຄວາມຫຍຸ້ງຍາກ ຊຶ່ງພົວພັນກັບຫຼາຍພາກສ່ວນ ກໍານົດເວລາຂອງການ ພິຈາລະນານັ້ນ ບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ເປັນຕົ້ນໄປ.

- ✓ **ສະພາແຫ່ງຊາດ**: ພິຈາລະນາ 1. ຄຳຮ້ອງຂໍຄວາມເປັນທຳ ໃຫ້ກວດກາ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ລັດຖະບານ, 2. ຄຳຮ້ອງຂໍຄວາມເປັນທຳ ໃຫ້ກວດກາ ການຕົກລົງກ່ຽວກັບການພິຈາລະນາຄຳຮ້ອງຂໍຄວາມ ເປັນທຳ ຫຼື ການສະເໜີ ຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ; 3. ຄຳຮ້ອງຂໍຄວາມເປັນທຳ ໃຫ້ກວດກາ ການຕົກລົງກ່ຽວກັບການຕິດຕາມກວດກາ ຂອງ ອົງການ ໄອຍະການປະຊາຊົນສູງສຸດ ໃນການແກ້ໄຂຄຳຮ້ອງຟ້ອງ ແລະ ການປະຕິບັດຄຳຕັດສິນຂອງສານ; 4. ຄຳຮ້ອງຂໍຄວາມເປັນທຳ ໃຫ້ກວດກາ ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ທີ່ຮັບຜິດຊອບວຽກງານແກ້ໄຂຄຳຮ້ອງທຸກ. ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປີ 2022) ມາດຕາ 31 (ປັບປຸງ).
- ✓ **ສະພາປະຊາຊົນແຂວງ:** ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ໃຫ້ກວດກາການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງອົງການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ ກົດ ໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປີ 2022) ມາດຕາ 29 (ປັບປຸງ).
- ✓ **ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ:** ຮັບຕ້ອນ ແລະ ຮັບຟັງຄຳເຫັນຂອງປະຊາຊົນ ກ່ຽວກັບບັນຫາຕ່າງໆ, ກົດໝາຍ ວ່າດ້ວຍສະພາປະຊາຊົນ ຂັ້ນແຂວງ ປີ2015 ມາດຕາ 45 ຂໍ້ 06.
- ✓ **ສະມາຊິກສະພາປະຊາຊົນຂັ້ນແຂວງ:** ໃກ້ຊິດຕິດແທດ, ພົບປະ, ຮັບຕ້ອນປະຊາຊົນ, ລາຍງານການເຄື່ອນໄຫວວຽກງານ ຕໍ່ປະຊາຊົນໃນເຂດເລືອກຕັ້ງ ຂອງຕົນ, ເກັບກຳ ແລະ ນຳເອົາຄວາມ ຄິດເຫັນ ແລະ ຄຳສະເໜີຂອງປະຊາຊົນ ເພື່ອສະເໜີຕໍ່ສະພາປະຊາຊົນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງພິຈາລະນາ, ແກ້ໄຂ ທັງຕິດຕາມຜົນຂອງການແກ້ໄຂ; ໃຫ້ຄຳປຶກສາ ແລະ ຄຳແນະນຳແກ່ພົນລະເມືອງ ກ່ຽວກັບການຍື່ນຄຳຮ້ອງທຸກ ແລະ ບັນຫາຕ່າງໆທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນ, ກົດໝາຍ ວ່າດ້ວຍສະພາປະຊາຊົນ ຂັ້ນແຂວງ ປີ2015 ມາດຕາ 30 ຂໍ້ 6 ແລະ 7.

## 14. ການບໍລິການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ

ການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນ ການແນະນຳ, ອະທິບາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນ ກ່ຽວກັບກົດໝາຍ ທີ່ກ່ຽວຂ້ອງກັບການຮ້ອງຂໍ. (ມາດຕາ 9; ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ,)

ປະຊາຊົນທົ່ວໄປ ມີສິດຂໍຄຳປຶກສາທາງດ້ານກົດໝາຍ ນຳອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແຕ່ການແຕ່ງຕັ້ງທະນາຍຄວາມໃຫ້ວ່າຄວາມ ຫຼື ເປັນຜູ້ຕາງໜ້າທາງດ້ານກົດໝາຍ ແມ່ນສະເພາະຜູ້ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີ 7 ກຸ່ມຄົນ ຕາມທີ່ກຳນົດໄວ້ ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ, ມາດຕາ 12.

**ສິ່ງທີ່ສຳຄັນ:** ການໄດ້ຮັບຄຳປຶກສາ ແລະ/ຫຼືການໃຫ້ບໍລິການ ໃຫ້ຄຳປຶກສາທາງດ້ານກົດໝາຍ ຄວນເກີດຂຶ້ນກ່ອນ ຫຼື ໄລະຍະກຳລັງ ຫຼື ພາຍຫລັງການຂອງການໄກ່ເກ່ຍຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເພື່ອສ້າງຄວາມຮູ້ກ່ຽວກັບສິດ ແລະ ພັນທະ ຂອງຜູ້ຂໍຄຳປຶກສາ ຫຼື ຄູ່ກໍລະນີ ພ້ອມທັງເປັນການປະເມີນໃຫ້ເຫັນເຖິງຜົນສະທ້ອນທາງດ້ານກົດໝາຍ ອາດເປັນຄວາມສ່ຽງ, ໂອກາດ ຫຼື ຄວາມເປັນໄປໄດ້ ແລະ ອື່ນໆ ກ່ຽວກັບບັນຫາທາງດ້ານກົດໝາຍ.

ການໃຫ້ບໍລິການດ້ານກົດໝາຍ ລວມທັງການໃຫ້ຄຳປຶກສາທາງດ້ານກົດໝາຍ ທີ່ມີຄວາມຮັບຜິດຊອບ ແມ່ນຕ້ອງຄຳນຶງເຖິງ ຫລັກການ ດັ່ງນີ້:

1. ການຮັກສາຄວາມລັບ: ຂໍ້ມູນຂອງຜູ້ທີ່ມາຂໍປຶກສາ ຫຼືລູກຄວາມ, ປ້ອງກັນຄວາມເສຍຫາຍ ຫຼື ຄວາມສ່ຽງ;
2. ການບໍ່ມີຜົນປະໂຫຍດຂັດກັນ;
3. ຄວາມຊື່ສັດ;
4. ການປະຕິບັດວຽກງານຢ່າງເປັນເອກະລາດ ແລະ ປາສະຈາກອິດທິພົນຈາກຄົນອື່ນໆ;
5. ການສົ່ງເສີມ ການປົກຄອງລັດດ້ວຍກົດໝາຍ ແລະ ການເຂົ້າເຖິງຄວາມຍຸຕິທຳ.

**ເບີໂທສາຍດ່ວນ**

- 156: ສະພາແຫ່ງຊາດ
- 1516: ລັດຖະບານ
- 1514: ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
- 021 841 120: ກະຊວງຍຸຕິທຳ
- 1362: ສູນໃຫ້ຄຳປຶກສາ ຂອງສະຫະພັນແມ່ຍິງລາວ
- 021 990 445: ສະພາທະນາຍຄວາມ
- 021 486 015: ສູນບໍລິການກົດໝາຍເພື່ອປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
- 1300: ຕ້ານການຄ້າມະນຸດ
- 1511: ລາຍງານໄພພິບັດ, ແຮງງານ ແລະ ສິ່ງເຄາະ

### ❖ ການຊ່ວຍເຫຼືອທາງດ້ານກົດໝາຍແບບສະໝັກໃຈ ຫຼື ຈິດອາສາທາງດ້ານ ກົດໝາຍ (Pro bono)

ການບໍລິການທາງດ້ານກົດໝາຍຂອງວິຊາຊີບທະນາຍຄວາມ ແມ່ນ ຜົນປະໂຫຍດອັນສຳຄັນຕໍ່ສາທາລະນະ ແລະ ວິຊາຊີບ ແລະ ຊ່ວຍໃນການຕອບສະໜອງຄວາມຕ້ອງການທາງດ້ານກົດໝາຍທີ່ຍັງຂາດເຂີນຂອງຜູ້ທຸກຍາກ ແລະ ດ້ອຍໂອກາດ, ວິຊາຊີບທາງດ້ານກົດໝາຍມີໜ້າທີ່ ແລະ ໂອກາດໃນການສະໜອງການບໍລິການຊ່ວຍ ເຫຼືອດ້ານກົດ ໝາຍດ້ວຍຄວາມສະໝັກໃຈ (IBA ຖະແຫຼງການ Pro bono, 2008).

ແມ່ນຄວາມສະໝັກໃຈ ຫຼື ຈິດອາສາ ຂອງທະນາຍຄວາມ, ຜູ້ຊ່ວຍທະນາຍຄວາມ ຫຼື ນັກກົດໝາຍ, ອົງການຈັດຕັ້ງຂອງທະນາຍຄວາມ(ສະພາທະນາຍຄວາມ, ວິສາຫະກິດກົດໝາຍ) ຫຼືອົງການຈັດຕັ້ງ ທີ່ບໍ່

ສະແຫວງ ຫາຜົນກຳໄລ ຫຼືສະຖາບັນການສຶກສາກົດໝາຍ ທີ່ບໍ່ມີຂໍ້ຈຳກັດທາງດ້ານເງື່ອນໄຂ ຫຼື ກຸ່ມຄົນ ນຳໃຊ້ຊັບພະຍາ ກອນຂອງຕົນເອງ ອັນມີເປົ້າໝາຍເພື່ອປະໂຫຍດແຫ່ງຄວາມຍຸຕິທຳທາງສັງຄົມ ແລະ ປະໂຫຍດທາງສາທາລະນະ.

ການຊ່ວຍເຫຼືອທາງດ້ານກົດໝາຍ ດ້ວຍຄວາມສະໝັກໃຈ ແມ່ນການໃຫ້ບໍລິການທາງດ້ານກົດໝາຍ ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈຂອງທະນາຍຄວາມ ຫຼືວິສາຫະກິດກົດໝາຍ ໂດຍບໍ່ເສຍຄ່າບໍລິການ ຫຼື ຄິດຄ່າບໍລິການໃນອັດຕາທີ່ຫລຸດຜ່ອນ (ມາດຕາ 32; ກົດໝາຍທະນາຍຄວາມ ປີ 2023).

❖ **ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ (Legal aid)**

ແມ່ນການໃຫ້ບໍລິການທາງດ້ານກົດໝາຍແກ່ຜູ້ທຸກຍາກ, ເດັກທີ່ຕ້ອງການປົກປ້ອງພິເສດ, ຄົນພິການ, ຜູ້ດ້ອຍໂອກາດ, ແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ຫຼື ຜູ້ເຄາະຮ້າຍຈາກການຄ້າມະນຸດ, ຜູ້ກໍາທໍາຜິດທີ່ກົດໝາຍກໍານົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ ຊຶ່ງບໍ່ຄິດຄ່າບໍລິການນໍາລູກຄວາມ ໂດຍຜ່ານການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ປະຈໍາຫ້ອງການສະພາທະນາຍຄວາມແຂວງ, ນະຄອນ ຫຼວງ ຫຼື ສະພາທະນາຍຄວາມປະຈໍາເມືອງ, ເທດສະບານ, ນະຄອນ (ມາດຕາ 31; ກົດໝາຍທະນາຍ ຄວາມ ປີ 2023).

❖ **ບຸກຄົນໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ**

ບຸກຄົນໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແມ່ນລັດຖະກອນ ຫຼື ທະນາຍຄວາມ ທີ່ຖືກແຕ່ງຕັ້ງໂດຍ ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ. (ມາດຕາ 16; ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງ ດ້ານກົດໝາຍ)

❖ **ຊ່ອງທາງການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ໂດຍບໍ່ເສຍຄ່າ**

ຊ່ອງທາງການເຂົ້າເຖິງ ການຊ່ວຍເຫຼືອທາງດ້ານກົດໝາຍ ສໍາລັບບຸກຄົນທົ່ວໄປ ແລະ 7 ກຸ່ມຄົນເປົ້າໝາຍທີ່ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ (Legal aid) ຕາມ ມາດຕາ 12 ຂອງ ດໍາລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ.

## ເອກະສານຊ້ອນທ້າຍ